

# ໄວຍາກອນລາວ ພາກ ໔

# ສັນທະລັກສນະ

# LAO GRAMMAR IV
# POETICS

# <u>ພຣະຣາຊອານາຈັກລາວ</u>

# <u>ກະຊວງສຶກສາທິການ</u>

## ໄວຍາກອນລາວ ພາກ ໔
## ສັນທະລັກສນະ

**LAO GRAMMAR IV**
**POETICS**

ຂຽນໂດຍ ມະຫາ ສີລາ ວີຣະວົງ
໑໓ ມະກະຣາ ໑໙໖໑

ຮັບຮອງໂດຍ ຣາຊບັນດິດສະພາລາວ
໑໕ ກັນຍາ ໑໙໗໐

## ຄຳນຳຂອງກະຊວງສຶກສາທິການ

---===OO===---

### ສຳລັບໜັງສືໄວຍາກອນລາວ

ເນື່ອງຈາກໄດ້ມີພຣະຣາຊໂອງການເລກທີ່ ໑໐ ລົງວັນທີ່ ໑໗ ມະກະຣາ (ຊັງວິເຢ) ໑໙໔໙ ກຳນົດການສະກົດຄຳໃນພາສາລາວໄວ້ ໂດຍໃຫ້ຂຽນຕາມສຽງເວົ້າໃນພາສາລາວເປັນຫຼັກ ແຕ່ທີ່ທີ່ໄດ້ສັງເກດ ເບິ່ງການສະກົດຕົວໜັງສື ທີ່ພວກນາຍຄຣູໃຊ້ໃນການສັ່ງສອນນັກຮຽນແລະ ໃນແບບຮຽນຕ່າງໆ ຍັງບໍ່ເປັນແບບດຽວກັນເທື່ອ ດັ່ງນັ້ນ ຈຶ່ງໄດ້ສເນີ ເຣື່ອງນີ້ຕໍ່ຄນະກັມມະການວັນນະຄະດີ ເພື່ອຂໍໃຫ້ມອບໝາຍໃຫ້ຜູ້ໃດຜູ້ນຶ່ງ ຮຽບຮຽງໜັງສືໄວຍາກອນລາວຂຶ້ນເພື່ອໃຫ້ມີໃຊ້ໄປຊາມຊາກ່ອນ ທີ່ປະຊຸມ ຄນະກັມມະການວັນນະຄະດີ ຈຶ່ງໄດ້ມອບໝາຍໃຫ້ ມະຫາສີລາ ວີຣະວົງ ເລຂານຸການຄນະກັມມະການວັນນະຄະດີ ຮຽບຮຽງໜັງສືໄວຍາກອນລາວ ນີ້ຂຶ້ນ.

ບັດນີ້ ມະຫາສີລາ ວີຣະວົງ ໄດ້ຮຽບຮຽງໄວຍາກອນລາວນີ້ສຳເຣັດຮຽບຮ້ອຍແລ້ວທັງ ໔ ພາກ ຄື: ໑ ອັກຂຣະວິທີ ໒. ວະຈີວິພາກ ໓. ວາກຍະສັມພັນ ໔. ສັນທະລັກສນະ ທາງກະຊວງສຶກສາທິການ ຈຶ່ງ ອະນຸຍາດໃຫ້ຄນະກັມມະການວັນນະຄະດີ ຈັດພິມຂຶ້ນ ເພື່ອໃຊ້ເປັນແບບ ຮຽນໃນໂຮງຮຽນຂອງກະຊວງສຶກສາຕໍ່ໄປ ກະຊວງສຶກສາ ຂໍຂອບຄຸນ ຄນະກັມມະການວັນນະຄະດີໄວ້ໃນທີ່ນີ້ດ້ວຍ.

ວຽງຈັນ, ວັນທີ່ ໘ ມະກະຣາ ໑໙໕໑

ຣັຖມົນຕີກະຊວງສຶກສາທິການ <u>ລາຍເຊັນ</u> ຫງຸຍອະພັຍ

# ຄໍານໍາຂອງຄນະກັມມະການວັນນະຄະດີ

ຄນະກັມມະການວັນນະຄະດີລາວ ໄດ້ຖືກແຕ່ງຕັ້ງຂຶ້ນແຕ່ປີ ກ.ສ. ໑໙໕໐ ຕາມດໍາຣັດຂອງນາຍົກຣັຖມົນຕີ ສບັບເລກທີ່ ໒໐໗ ລົງວັນທີ່ ໒໗ ສິງຫາ (ອາອຸດ) ໂດຍອາສັຍພຣະຣາຊໂອງການສບັບເລກທີ່ ໑໓໒ ລົງວັນທີ່ ໑໔ ມິຖຸນາ (ຊວງ) ແລະ ເລກທີ່ ໓໔ ລົງວັນທີ່ ໒໘ ກຸມພາ (ເຟວຣີເຍ) ໑໙໕໐ ໃນມາດຕາ ໓ ແຫ່ງດໍາຣັດທີ່ກ່າວນີ້ ໄດ້ກໍານົດຈໍານວນຄນະກັມມະການໄວ້ທັງໝົດ ໒໕ ທ່ານ ແຕ່ວ່າໃນຂັ້ນຕົ້ນນີ້ ໄດ້ແຕ່ງຕັ້ງຂຶ້ນກ່ອນແຕ່ພຽງ ໕ ທ່ານ ເພື່ອໃຫ້ເປັນປະຖົມສະມາຊິກ, ຄນະກັມມະການປະຖົມສະມາຊິກ ໕ ທ່ານນັ້ນຄື:

໑/ ພຣະທ່ານ ກຸ ອະພັຍ ເປັນປະທານ (ເຖິງແກ່ກັມແລ້ວ)

໒/ ພຣະທ່ານ ຕຸຍ ປັນຍາ ຮອງປະທານ

໓/ ພຣະທ່ານ ບົງ ສຸວັນນະວົງ ເປັນກັມມະການ

໔/ ທ່ານ ສົມຈິນ ປີແອງິນ ກັມມະການ

໕/ ທ່ານ ມະຫາ ສີລາ ວິຣະວົງ ກັມມະການ

ຕໍ່ໆມາຈົນເຖິງປີ ກ.ສ. ໑໙໖໐ ມີທ່ານຜູ້ມີກຽດຫຼາຍທ່ານ ໄດ້ຮັບເຊີນເຂົ້າເປັນຄນະກັມມະການຕື່ມອີກຕາມລໍາດັບຄືປັດຈຸບັນນີ້ ໄດ້ມີຄນະກັມມະການຢູ່ແລ້ວເຖິງ ໑໔ ທ່ານ:

໑/ ພຣະທ່ານ ກຸ ອະພັຍ ປະທານກິດຕິມະສັກ

໒/ ພຣະທ່ານ ຕຸຍ ປັນຍາ ຮອງປະທານກິດຕິມະສັກ

໓/ ທ່ານ ສົມຈິນ ປີແອງິນ ປະທານກັມມະການຈັດການປະຈໍາປີ

໔/ ພຣະທ່ານ ບົງ ສຸວັນນະວົງ ຮອງປະທານກັມມະການຈັດການປະຈໍາປີ

໕/ ມະຫາ ສີລາ ວີຣະວົງ ກັມມະການແລະເລຂານຸການ (ລາອອກແລ້ວ)

໖/ ພຣະທ່ານ ຫຼຸຍ ອະພັຍ ກັມມະການ (ເຖິງແກ່ກັມແລ້ວ)

໗/ ທ່ານ ເກື້ອງ ປະທຸມຊາດ ກັມມະການ

໘/ ທ່ານ ຄູນ ພິລາວັນ ກັມມະການ

໙/ ທ່ານ ພູວົງ ພິມມະສອນ ກັມມະການ (ປັດຈຸບັນເປັນເລຂາທິການ)

໑໐/ ທ່ານ ໜູຫັກ ສິດທິມໍຣະດາ ກັມມະການ (ເຖິງແກ່ກັມແລ້ວ)

໑໑/ ທ່ານ ມະຫາ ພູມີ ຈິຕພົງ ກັມມະການ (ເຖິງແກ່ກັມແລ້ວ)

໑໒/ ທ່ານ ເກນ ກັມມະການ

໑໓/ ທ່ານ ໄຕ ແກ້ວຫຼວງໂຄດ ກັມມະການ

໑໔/ ທ່ານ ສຸພັນ ບລັງຊາເດີລາບອິດ ກັມມະການ

ໃນມາດຕາ ໔ ແຫ່ງດໍາຣັດຈັດຕັ້ງຄນະກັມມະການວັນນະຄະດີທີ່ກ່າວມາແລ້ວ ໄດ້ຊີ້ຈຸດໝາຍສໍາຄັນແຫ່ງວຽກການຂອງກັມມະການໄວ້ດັ່ງນີ້:

໑– ພິຈາຣະນາຮ່າງແບບສອນອ່ານທັງປວງ ແລະ ວັນນະຄະດີເດີມກ່ຽວກັບການສຶກສາ

໒– ການສຶກສາກ່ຽວກັບໄວຍາກອນ, ພາສາ ແລະອັກສອນສາດ

໓– ຮຽບຮຽງເອົາວັນນະຄະດີຕ່າງປະເທດ

໔– ພິຈາຣະນາການພິມໜັງສືວັນນະຄະດີ ທີ່ກ່ຽວກັບພາສາ ແລະ ອັກສອນສາດລາວອອກຢາຍ

໕– ຈັດຕັ້ງລະບຽບການຂຽນອັກສອນລາວ

໖– ຈັດການແຕ່ງວັຈນານຸກົມຂື້ນ

໗– ກຳນົດຣາງວັນປະຈຳປີ ສຳລັບບຳເໜັດແກ່ຜູ້ແຕ່ງໜັງສືລາວໄດ້ດີ ຕາມຫົວຂໍ້ທີ່ຄນະກັມມະການກຳນົດໃຫ້. ຄນະກັມມະການຈັດການທີ່ໄດ້ຖືກຄັດເລືອກສຳລັບປີ ໑໙໕໐ ແລະ ໑໙໕໔ ນັ້ນຄື:

໑– ພນະທ່ານ ກຸ ອະພັຍ ເປັນປະທານ

໒– ພນະທ່ານ ພຸຍ ປັນຍາ ຮອງປະທານ

໓– ທ່ານ ມະຫາ ສີລາ ວີຣະວົງ ເລຂານຸການ

ນັບແຕ່ປີ ໑໙໕໘ ເປັນຕົ້ນມາ ຄນະກັມມະການຈັດການທີ່ຖືກຄັດເລືອກໃຫ້ດຳເນີນງານ ຕໍ່ມາຈົນເຖິງປັດຈຸບັນນີ້ ແມ່ນ:

໑– ທ່ານ ສົມຈິນ ປີແອງິນ ເປັນປະທານ

໒– ພນະທ່ານ ບົງ ສຸວັນນະວົງ ຮອງປະທານ

໓– ທ່ານ ພູວົງ ພິມມະສອນ ເລຂານຸການ

ເພື່ອປະຕິບັດການໃຫ້ໄດ້ຜົນຕາມຈຸດໝາຍ ແຫ່ງດຳຣັດນີ້ ຄນະກັມມະການວັນນະຄະດີຈຶ່ງເຫັນດີພ້ອມກັນຢິບຍົກເອົາຂໍ້ທີ່ ໕ ແລະທີ່ ໖ ແຫ່ງມາດຕາ ໔ ຂອງດຳຣັດນີ້ຄື: ການຈັດຕັ້ງລະບຽບຂຽນອັກສອນລາວແລະການແຕ່ງວັຈນານຸກົມລາວ ຂື້ນມາພິຈາຣະນາກ່ອນເພາະເຫັນວ່າການຈັດແຕ່ງແບບຂຽນແບບອ່ານຕ່າງໆໄປກໍດີ ການຊຳຣະແກ້ໄຂໜັງສືວັນນະຄະດີເກົ່າອອກມາພິມ ກໍດີ ຈຳເປັນຕ້ອງຂຽນແລະພິມໃຫ້ຖືກຕ້ອງເປັນລະບຽບ

ອັນນຶ່ງອັນດຽວກັບການສຶກສາໜັງສືລາວແລະພາສາລາວ ຈຶ່ງຈະດຳເນີນໄປ ໄດ້ສະນັ້ນຄນະກັມມະການຈຶ່ງໄດ້ຟື້ນຟູເອົາຣາຊໂອງການເລກທີ່ ໑໐ ລົງ ວັນທີ່ ໒໗ ມະກະຣາ ໑໙໔໙ ທີ່ກ່າວດ້ວຍຫຼັກການຂຽນໜັງສືລາວຂຶ້ນມາພິ ຈາຣະນາແກ້ໄຂແລ້ວພ້ອມກັນແຕ່ງໄວຍາກອນລາວ ພາກອັກຂຣະວິທີຂຶ້ນ , ເປັນສະບັບແຮກ ໜັງສືນີ້ກ່າວດ້ວຍອັກຂຣະວິທີລາວ ຄື: ສຣະ ພຍັນຊນະ ແລະ ວິທີຂຽນສະກົດຄຳຕລອດເຖິງບັນຍັດເຄື່ອງໝາຍຕ່າງໆ ໄວ້ຄົບຖ້ວນ ຕາມລັກສນະຂອງພາສາລາວ ແລະ ໜັງສືລາວ, ໜັງສືໄວຍາກອນລາວ ພາກອັກຂຣະວິທີນີ້ຄນະກັມມະການໄດ້ປະຊຸມກັນແຕ່ງເຖິງ ໑໐ ເທື່ອຈຶ່ງສຳ ເຣັດບໍຣະບູນ ແລະ ໄດ້ຈັດພິມຂຶ້ນແຈກຢາຍຄັ້ງແຮກ ແຕ່ປີ ກ.ສ ໑໙໕໔ ຕໍ່ນັ້ນມາກໍໄດ້ປະຊຸມກັນແກ້ໄຂຕື່ມແຖມ ແລະ ຈັດພິມຂຶ້ນໃໝ່ອີກໃນປີ ກ.ສ. ໑໙໖໐ ໃນຄນະເມື່ອແຕ່ງແບບໄວຍາກອນພາກອັກຂຣະວິທີຢູ່ນັ້ນຄນະກັມມະ ການກໍໄດ້ປະຊຸມກັນວາງຫຼັກເກນແຕ່ງໜັງສືວັຈນານຸກົມລາວຂຶ້ນພ້ອມໆກັນຄັ້ງ ແຮກແຕ່ປີ ໑໙໕໔ ເປັນຕົ້ນມາ ເມື່ອໄດ້ວາງຫຼັກເກນແຕ່ງ ແລະການລຽນ ລຳດັບໄວ້ແລ້ວ ຈຶ່ງມອບໃຫ້ມະຫາສີລາ ວີຣະວົງ ເຊິ່ງເປັນກັມມະການວັນ ນະຄະດີ ແລະ ຫົວໜ້າຫ້ອງການວັນນະຄະດີດ້ວຍເປັນຜູ້ຫ້ອບໂຮມຄຳ ຈັດວິ ທີລຽນລຳດັບຄຳໄວ້ເປັນໝວດໆ ແລ້ວສເນີຕໍ່ຄນະກັມມະການໃຫ້ປະຊຸມພິຈາ ຣະນາແກ້ໄຂໃນການປະຊຸມທຸກເທື່ອ ແຕ່ວ່າເນື່ອງຈາກກັມມະການຫຼາຍ ທ່ານ ມີພາຣະໜ້າທີ່ການງານຢ່າງອື່ນໆມາກຫຼາຍທັງພາຍໃນປະເທດ ແລະ ນອກປະເທດການຈັດວັຈນານຸກົມອັນເປັນໜັງສືສຳຄັນ ແລະ ໃຫຍ່ຍິ່ງກໍຈະ ເປັນການລ້າຊ້າເສັຽເວລາບໍ່ທັນຄວາມຕ້ອງການ ແລະ ຄວາມຈຳເປັນໃນ ເວລານີ້ ດັ່ງນັ້ນ ຄນະກັມມະການຈຶ່ງໄດ້ມອບໝາຍໃຫ້ ມະຫາ ສີລາ ວີຣະ

ວົງ ຈັດທຳໄປ ພ້ອມກັບໃຫ້ແຕ່ງແບບໄວຍາກອນລາວ ພາກ ໒ ຄື ອະຈິວິພາກ ພາກ ໓ ອາກຍະສັມພັນ ພາກ ໔ ສັບທະລັກສນະ ໃຫ້ສຳເຣັດບໍຣະບອນ ເພື່ອໃຫ້ໃຊ້ເປັນຫຼັກໃນການຮຽນໄວຍາກອນລາວໄປຊາມຊາກ່ອນ ບັດນີ້ມະຫາ ສີລາ ວີຣະວົງ ໄດ້ທ້ອນໂຮມຄຳ ຈັດທຳເປັນໜັງສືວັຈນານຸກົມຕັ້ງແຕ່ ກ. ເຖິງ ຮ. ພ້ອມທັງໜັງສືໄວຍາກອນລາວອີກ ໓ ພາກ ຄື ອະຈິວິພາກ ອາກຍະສັມພັນ ແລະ ສັບທະລັກສນະ ຂຶ້ນສຳເຣັດບໍຣະບອນ ແລ້ວ ຄນະກັມມະການຈຶ່ງໄດ້ເຂົ້າປະຊຸມກັນ ຄັ້ງວັນທີ່ ໑໕ ກຸມພາ ໑໙໕໑ ນີ້ ເພື່ອພິຈາຣະນາຮັບຮອງເອົາໜັງສືດັ່ງກ່າວນີ້ ແລ້ວໃຫ້ທາງຣາຊການກະຊວງສຶກສາພິມແຜ່ຫຼາຍໄດ້.

ໜັງສືວັຈນານຸກົມນີ້ ກໍດີ ຄນະກັມມະການເຊື່ອແນ່ວ່າ ຍັງມີບ່ອນຜິດພາດຂາດເຂີນຢູ່ເປັນອັນມາກຍິ່ງໜັກໜາ ເປັນການຊຳຮະສະສາງຄັ້ງແຮກ ແຕ່ເຖິງດັ່ງນັ້ນ ຄນະກັມມະການກໍຫຼິງເຫັນວ່າ ຄົງຈະເປັນ ປໂຍດອັນຍິ່ງໃຫຍ່ແກ່ການສຶກສາ ແລະ ຄົ້ນຄວ້າຕໍ່ໄປ ຈຶ່ງໄດ້ພິມອອກແຜ່ຫຼາຍ ເພື່ອໃຫ້ທ່ານຜູ້ຮູ້ທັງຫຼາຍ ຊ່ວຍກັນພິຈາຣະນາແກ້ໃຫ້ບໍຣິບູນດີຂຶ້ນ ຄນະກັມມະການມີຄວາມຍິນດີສເມີໃນຄວາມຕຸກເຕືອນຂອງທ່ານຜູ້ຮູ້ ແລະຜູ້ສົນໃຈໃນການຈະແກ້ໄຂໜັງສືວັຈນານຸກົມລາວ ແລະ ໄວຍາກອນລາວນີ້ ໃຫ້ຖືກຕ້ອງ ແລະ ບໍຣິບູນດີໃນພາຍພາກໜ້າ.

ທ້າຍສຸດນີ້ ຄນະກັມມະການ ຂໍຂອບຄຸນທ່ານ ມະຫາ ສີລາ ວີຣະວົງ ກັມມະການວັນນະຄະດີ ແລະ ຫົວໜ້າຫ້ອງການວັນນະຄະດີຜູ້ໄດ້ພາກພຽນພຍາຍາມຈັດທຳໜັງສືວັຈນານຸກົມລາວ ແລະ ໄວຍາກອນລາວນີ້ຂຶ້ນຈົນເປັນຜົນສຳເຣັດ ອັນເປັນຄຸນ ປໂຍດແກ່ປະເທດຊາດບ້ານເມືອງຢ່າງ

ສຳຄັນຍິ່ງ ນອກນີ້ ຄນະກັມມະການຂໍຂອບຄຸນ ມ.ລ. ມານິດ ຊຸມສາຍ ຜູ້ຊຳນານການສຶກສາແຫ່ງ ຢູເນສໂກ ປະຈຳພຣະຣາຊອານາຈັກລາວ ທີ່ໄດ້ຊ່ອຍຈັດການພິມໜັງສືເຫຼັ້ມນີ້ໃຫ້ເປັນຜົນສຳເຣັດດ້ວຍ. (ພິມຄັ້ງທີ່ນຶ່ງ)

## ຄນະກັມມະການປັດຈຸບັນ

ພນະທ່ານ ຜຸຍ ປັນຍາ ຮອງປະທານກັມມະການກິດຕິມະສັກ

ທ່ານ ສິມຈິນ ປີແອງິນ ປະທານກັມມະການຈັດການປະຈຳປີ

ພນະທ່ານ ບົງ ສຸວັນນະວົງ ຮອງປະທານກັມມະການຈັດການປະຈຳປີ

ທ່ານ ພູວົງ ພົມມະສອນ ເລຂາທິການ

ພນະທ່ານ ໄຕ ແກ້ວຫຼວງໂຄດ ກັມມະການ

ທ່ານ ສຸພັນ ບລັງຊາເດີລາບຣິດ ກັມມະການ

ທ່ານ ຄູນ ພິລາວັນ ກັມມະການ

ທ່ານ ເກື່ອງ ປະທຸມຊາດ ກັມມະການ

ທ່ານ ເກນ ກັມມະການ

ວຽງຈັນ, ວັນທີ່ ໑໕ ເດືອນ ກັນຍາ ໑໙໗໐

ປະທານຣາຊບັນດິດສະພາລາວ

ສົມຈິນ ງິນ

# ສ າ ຣ ະ ບ າ ນ

## ບົດທີ່ ໑ ຫຼັກເກນຂອງກອນລາວ


| | | |
|---|---|---|
| ກ. ຄຳອະທິບາຍ .................... | ໜ້າ | ກ |
| ໑. ຄຳເອົ້າ .................... | " | ໑ |
| ໒. ອັກ ແລະ ບົດ .................... | " | ໒ |
| ໓. ຄຳບຸພບົດ ແລະ ຄຳສ້ອຍ .................... | " | ໕ |
| ໔. ຄຳປະຈຳບ່ອນ .................... | " | ໗ |
| <u>ບົດທີ່ ໒ ສັມຜັດ</u> .......... | " | ໘ |
| <u>ກ. ສັມຜັດນອກ</u> .................... | " | ໘ |
| ໑. ລັກສນະກອນລຳ .................... | " | ໘ |
| ໒. ລັກສນະກອນອ່ານວິດຊຸມາລີ .................... | " | ໙ |
| ໓. ລັກສນະກອນແປດແບບໄທ .................... | " | ໑໐ |
| <u>ຂ. ສັມຜັດໃນ</u> .................... | " | ໑໒ |
| ໑. ສັມຜັດສຣະ .................... | " | ໑໒ |
| ໒. ສັມຜັດພຍັນຊນະ .................... | " | ໑໓ |
| <u>ບົດທີ່ ໓ ປະເພດຂອງຄຳກອນລາວ</u> | " | ໑໔ |
| ໑. ກອນກາບ .................... | " | ໑໔ |
| ໒. ກອນລຳ .................... | " | ໑໖ |
| ໓. ກອນອ່ານ .................... | " | ໑໘ |
| ກ. ກອນອ່ານທັມມະດາ .................... | " | ໑໙ |

ຂ. ກອນອ່ານແບບວິດຊຸມາລີ .................... ໜ້າ ໔໐
໔. ກອນຮ່າຍ .................... " ໔໘
ກ. ກອນຮ່າຍສຸດຂອັນ .................... " ໔໙
ຂ. ກອນຮ່າຍສາລັບເທດ .................... " ໕໐
໕. ກອນພຍາ .................... " ໕໒
໖. ກອນໂຄງ .................... " ໕໓
ກ. ກອນໂຄງ ໕ .................... " ໕໖
ຂ. ກອນໂຄງ ໗ .................... " ໕໘

--== ໐໐ ==--

# ຄ ຳ ອ ະ ທິ ບ າ ຍ

--=== ooo ==---

ແຕ່ປາງບູຮານ ຫຼາຍພັນປີມາແລ້ວ ນັກປາດເພິ່ນໄດ້ຈັດຫຼັກວິຊາທີ່ກຸລບຸດ ຈະຕ້ອງສຶກສາໄວ້ເຖິງ ໑໘ ປະການ ຮຽກວ່າສິລປະສາດ ຫຼື ສາຕສິນປີ ໑໘ ຢ່າງຄື:

໑. ຍຸທສາດ — ວິຊານັກຮົບ

໒. ອັຖສາດ — ວິຊາປົກຄອງປະເທດ

໓. ນິຕິສາດ — ວິຊາກົດໝາຍແລະຈາຮີດປະເພນີ

໔. ວານິຊຍະສ່າດ — ວິຊາການຄ້າ

໕. ນິຣຸກຕິສາດ — ວິຊາພາສາ ຄືຄວາມຮູ້ໃນພາສາ ຂອງຕົນ ແລະ ຕ່າງປະເທດ

໖. ອັກສອນສາດ — ວິຊາໜັງສື

໗. ຄະນິດສາດ — ວິຊາເລກ (ການຄຳນວນ)

໘. ໂຊຕິຍະສາດ — ວິຊາຄວາມຮູ້ໃນເລື່ອງດວງດາວຕ່າງໆ

໙. ພູມິສາດ — ວິຊາຄວາມຮູ້ໃນເລື່ອງພູມປະເທດ

໑໐. ໂຫຣາສາດ — ວິຊາໝໍດູ ຄືທວາຍເຫດການຕ່າງໆ ລ່ວງໜ້າ ແລະ ພາຍຫຼັງໄດ້

໑໑. ເວຊສາດ — ວິຊາໝໍຢາ

໑໒. ສັຕວະສາດ — ຄວາມຮູ້ໃນເລື່ອງສັດຕ່າງໆ

໑໓. ເຫຕຸສາດ — ວິຊາຄົ້ນຄ້ວາຫາເຫດຜົນ ( ວິທຍາສາດ )

| | | |
|---|---|---|
| ໑໔. | ໂຍຄະສາດ | ວິຊາຊ່າງເຄື່ອງຍົນກົນໄກ |
| ໑໕. | ສາສນະສາດ | ຄວາມຮູ້ໃນທາງສາສນາ |
| ໑໖. | ນາຍາສາດ | ຄວາມຮູ້ໃນທາງກົນອຸບາຍ |
| ໑໗. | ຄັນທັພສາດ | ວິຊາຟ້ອນລຳ ແລະ ດົນຕີ |
| ໑໘. | ສັນທະສາດ | ວິຊາຄວາມຮູ້ໃນທາງແຕ່ງກາບກອນ. |

ສາຕສິນ ໑໘ ປະການທີ່ກ່າວມານີ້ ເຫັນໄດ້ຄັກວ່າ ວິຊາຄວາມຮູ້ໃນທາງແຕ່ງກາບກອນ ຄື ສັນທະສາດ ເປັນວິຊາສຳຄັນປະເພດນຶ່ງແລະ ທຸກວັນນີ້ປະເທດທົ່ວໂລກກໍນິຍົມຢູ່ວ່າວິຊາການປະພັນ ຄື ການແຕ່ງກາບກອນ ກໍເປັນສ່ວນສຳຄັນຢູ່ບໍ່ໜ້ອຍ ເພາະກາບກອນເປັນວັນນະສິນ ທີ່ອຳນວຍຄຸນປໂຍດໃຫ້ແກ່ປະເທດຊາດ ແລະສ່ວນບຸກຄົນທີ່ດີທໍ່ກັບສິລປະອື່ນໆ— ດັ່ງດຽວກັນ ດ້ວຍເຫດນີ້ປະເທດທີ່ຈເຣີນແລ້ວທັງຫຼາຍໃນໂລກ ຈຶ່ງບັນຈຸວິຊາການປະພັນ ຄື ການແຕ່ງກາບກອນ ເຂົ້າໄວ້ໃນຫຼັກສູດແຫ່ງການສຶກສາເປັນວິຊານຶ່ງ ແລະ ນັບເປັນວິຊາຊັ້ນສູງດ້ວຍ.

ປະເທດລາວ ແລະ ປະຊາຊົນລາວ ແຕ່ກ່ອນເຄີຍເປັນປະເທດທີ່ຈເຣີນ ປະຊາຊົນຄົນລາວກໍເຄີຍມີຜູ້ຮູ້ ຜູ້ສຳນານໃນວິຊາການແຕ່ງກາບກອນນີ້ມາຫຼາຍແລ້ວ ຈົນມີຜູ້ເວົ້າວ່າ ຄົນລາວເປັນນັກປະພັນ ຫຼື ນັກກະວີເກືອບທຸກຄົນ; ແຕ່ວ່ານັກປະພັນລາວ ຫຼື ນັກກະວີລາວໃນສມັຍປັດຈຸບັນນີ້ ເຖິງແມ່ນວ່າຈະແຕ່ງກາບກອນ ເປັນແລະລາງຄົນກໍແຕ່ງໄດ້ດີຢູ່ແຕ່ສ່ວນຫຼາຍບໍ່ສູ້ຈະຮູ້ຈັກກົດເກນຂອງກາບກອນຄັກແນ່ ເປັນແຕ່ແຕ່ງໄປຕາມຄວາມເຄີຍ ຫຼື ຕາມອາຣົມຂອງຕົນ ດັ່ງນັ້ນ ກາບກອນລາງບົດຈຶ່ງຂັດ

ເຂີນ ຟັງບໍ່ມ່ວນບໍ່ເປັນທີ່ຈັບໃຈ ອາສັຍເຫດດັ່ງກ່າວນີ້ ຂ້າພະເຈົ້າຈຶ່ງໄດ້ຣິຈນາແບບແຕ່ງກອນລາວນີ້ຂຶ້ນ ເພື່ອໃຫ້ເປັນແນວທາງການສຶກສາຂອງກຸລບຸດຜູ້ເກີດໃໝ່ໃຫຍ່ລຸ້ນ ແລະ ທ່ານຜູ້ໃສ່ໃຈໃນການແຕ່ງກາບກອນແບບແຕ່ງກາບກອນທີ່ຂ້າພະເຈົ້າຣິຈນາຂຶ້ນນີ້ ຂ້າພະເຈົ້າຊອກຄົ້ນຫາຫຼັກຖານຕ່າງໆຈາກໜັງສືວັນນະຄະດີລາວທັງຫຼາຍເກືອບທຸກເຣື່ອງ ເປັນເວລາເຖິງນານມາແລ້ວກວ່າ ໖໐ ປີ ຈຶ່ງໄດ້ຫຼັກຖານທີ່ທີ່ໄດ້ທ້ອນໂຮມມາໄວ້ໃນໜັງສືນີ້. ຂ້າພະເຈົ້າເຊື່ອວ່າແບບແຕ່ງກອນລາວບໍ່ແມ່ນຈະມີທໍ່ນີ້ ອາຈມີແບບອື່ນ ວາດອື່ນ ທຳນອງອື່ນອີກກໍໄດ້ ເຊິ່ງສຸດແລ້ວແຕ່ນັກປະພັນຈະຕັ້ງຂຶ້ນໃຫ້ເໝາະສົມກັບກາລະສມັຍແລະວາດຮ້ອງທຳນອງລຳ ສ່ວນແບບທີ່ຂ້າພະເຈົ້າຣິຈນານີ້ ໃຫ້ເຂົ້າໃຈວ່າ ເປັນແບບທີ່ເຄີຍມີມາແລ້ວແຕ່ບູຮານທໍ່ນັ້ນ.

---=== 000 =====---

ແບບແຕ່ງກອນລາວ

--==OO==-----

## ບົດທີ່ ໑

## ຫຼັກເກນຂອງກອນລາວ

ກ່ອນຈະຮຽນຮູ້ການແຕ່ງກອນລາວ ຫຼືທີ່ຮຽກເປັນສັບສູງວ່າ ກະວີນິພົນ ນັ້ນຕ້ອງຮູ້ຫຼັກເກນຕ່າງໆ ດັ່ງຕໍ່ໄປນີ້:

### ໑ ຄຳເວົ້າ

ຄຳເວົ້າຄຳນຶ່ງໃນກອນໝາຍເອົາ ສຽງທີ່ເວົ້າອອກມາເທື່ອນຶ່ງໆຫຼືໝາຍເອົາພຍັນຊນະກັບສຣະປະສົມກັນແລ້ວອ່ານອອກສຽງໄດ້ເທື່ອນຶ່ງ ເຊິ່ງຮຽກວ່າ ພຍາງ ເປັນຄຳນຶ່ງ ດັ່ງ ຄຳວ່າ ນົກ, ເນື້ອ, ບ້ານ, ເມືອງ ຄົນ, ເປັນຕົ້ນ ເວັ້ນແຕ່ຄຳຈຳພວກອັກສອນນຳທີ່ອ່ານອອກສຽງເປັນ, ໒ ພຍາງ ແຕ່ພຍາງໜ້າເປັນສຽງ ອະ ສເມີ ດັ່ງ ສເນ, ສນາມ, ຖແລງ, ຖນົນ, ຜຍາ, ຫລົງ ເປັນຕົ້ນ ຄຳຈຳພວກດັ່ງກ່າວນີ້ ເຖິງແມ່ນອອກສຽງເປັນ ໒ ພຍາງ ກໍນັບເປັນຄຳດຽວ, ຖ້າອອກສຽງເປັນ ໓ ພຍາງ ກໍນັບເປັນ ໒ ຄຳ ດັ່ງວິທຍາ, (ອ່ານວິດທະຍາ) ສາສນາ ພິສວົງ (ອ່ານພິດສະຫວົງ) ເປັນຕົ້ນ.

ລັກສນະຂອງຄຳ ໃນຫຼັກເກນຂອງກອນລາວນີ້ ແບ່ງອອກເປັນ ໔ ປະເພດ ຄື.

(໑) ຄຳຕາຍ ແມ່ນຄຳທີ່ຜັນສຽງໃຫ້ສູງຕ່ຳ ຕາມຮູບວັນນະຍຸດບໍ່ໄດ້ ຄຳຕາຍນີ້ແບ່ງອອກເປັນ ໒ ຈຸ ຄື:

ກ— ຈຸທີ່ປະກອບດ້ວຍຣັດສະສຣະທັງໝົດ ຄື: ກະ, ກິ, ກຸ, ກຶ, ເກະ

ແກະ, ເປັນຕົ້ນ ເວັ້ນແຕ່ສຣະ ໃ×, ໄ×, ເ×ົາ, ×ຳ,

ຂ– ຈຸທີ່ສະກົດດ້ວຍຕົວ ກ, ດ, ບ, ດັ່ງ ເບີກ, ເກີດ, ເກີບ, ເປັນຕົ້ນ (ຈຳພວກນີ້ນັບເປັນຄຳ ເອກດ້ວຍ)

(໒) <u>ຄຳເປັນ</u> ແມ່ນຄຳທີ່ຜັນສຽງໄດ້ຄຳເປັນນີ້ ຮຽກວ່າຄຳສຸພາບກໍໄດ້ ແບ່ງເປັນ ໒ ຈຸ ຄື:

ກ– ຈຸທີ່ປະກອບດ້ວຍທີຄະສຣະທັງໝົດ ດັ່ງ ກາ, ກີ, ກູ, ເກ, ແກ, ເປັນຕົ້ນ ແລະ ຄຳທີ່ປະກອບດ້ວຍ ສຣະ ໃ×, ໄ×, ເ×ົາ, ×ຳ,

ຂ– ຈຸທີ່ສະກົດດ້ວຍຕົວ ງ, ຍ, ນ, ມ, ວ, ດັ່ງ ນາງ, ສາຍ, ສີນ ສຸມ, ແສ່ວ ເປັນຕົ້ນ.

(໓) <u>ຄຳເອກ</u> ແມ່ນຄຳປະກອບດ້ວຍວັນນະຍຸດ ເອກ ແລະ ຄຳທີ່ສະກົດ ດ້ວຍຕົວ ກ, ດ, ບ, ຕົວຢ່າງ ໄກ່, ປ່າ, ປ່ານ, ຜ່ານ, ເມກ, ເທດ, ແບບ, ເປັນຕົ້ນ.

(໔) <u>ຄຳໂທ</u> ແມ່ນຄຳທີ່ປະກອບດ້ວຍວັນນະຍຸດໂທທັງໝົດ ດັ່ງ ໄມ້, ເບື້ອງ, ນ້ອງ, ບ້ານ, ນ້ຳ, ເກົ້າ, ເປັນຕົ້ນ.

## <u>໒ ອັກແລະບົດ</u>

ອັກແມ່ນລະຍະຂອງຄຳກະວີ ຕອນນຶ່ງໆທີ່ສຳຜັດກັນ; ຖ້າເປັນ ກອນ ໒. ກອນ ໓. ຫຼື ກອນ ໔. ກອນ ໕. ກອນ ໖. ກອນ ໗. ກໍ ມີ ໒ ຄຳ, ໓. ຄຳ, ໔. ຄຳ, ໕ ຄຳ, ໖ ຄຳ, ໗ ຄຳ, ເປັນອັກ ຕາມລຳດັບ ໂຕຢ່າງດັ່ງນີ້:

### <u>ສອງ ຄຳເປັນອັກນຶ່ງ</u>

ຊົກນົກ, ທົກກຽນ, ຕຽນແອ່ນ, ແບ່ນໂຕ, ໂສພາບ, ນາບຟານ,ຕານ
ບັ້ງ, ຊັ້ງໂກນ (ໂຄງໂຕເຜິ້ງຊ້າງ) ຊ້າງ ງົວ ຄຸດ ແມວ ຣາຊສີ
ເສືອ ນາກ ໝູ

## ສາມ ຄຳເປັນອັກນຶ່ງ

ສີຊົມຊື່ນ, ຊື່ນເມືອງພົມ, ສົມຢູ່ສ້າງ, ມ້າງສ້າງໂຄ, ໂພທິສັດ, ວັດ
ພຣະເຈົ້າ, ເຕົ້າຄົນໂຮມ (ໂສກກອງ)

## ສີ່ ຄຳເປັນຄຳນຶ່ງ

ກະຫຼີກກະຫຼົ້ນ, ພິກົນພິຢູ່, ຕັນຕູ້ຕັນຫາ, ກາເຜົ້າເຈົ້າຮັກ, ໆລໆ(ໂສກ
ຜູ້ສາວ)

## ຫ້າ ຄຳເປັນຄຳນຶ່ງ

ຫ້າງແຮ້ວຖືກຕີນສານ, ບໍ່ນານຂາດເປັນບັ້ນ, ຟ້າຂັ້ນທ່ອນເປັນດິນ ,
ນົກຢູ່ງບິນສູ່ໄມ້, (ໂຄງ ໕)

## ຫົກ ຄຳເປັນຄຳນຶ່ງ

ຫົດເປັນຮາກເຫງົ້າຫົວດີ, ຈັບເຄືອຍາວອີບໍ່ມື້ອ, ຄານເປັນພື້ອພາກດົກ
ໜາ, ພຸດມີນາລາບໍ່ເສົ້າ, ພະຫັດໝາກແຕ່ເຄົ້າເຖິງປາຍສຸກເປືອກໝາຫຼາຍ
ສຸດຍິ່ງ, ເສົາມີກ້ານກິ່ງລຳງາມ, (ໂຄງປູກຂອງຕານວັນ)

## ເຈັດ ຄຳເປັນຄຳນຶ່ງ

ເມືອງວຽງຈັນງາມດີສະອາດ, ມີຕລາດຂາຍເຂົ້າຂາຍປາ, ທັງວັດວາທີ່
ໂຮງກໍໃຫຍ່, ຖນົນໄຕ່ຕິດຕໍ່ເປັນສາຍ, ເກີນສະບາຍໄປມາບໍ່ບາກມີຣົດ
ລາກອິດແກ່ອົດຍົນ, ຢູ່ທາງບິນເຮືອເຫາະກົບເວີ່ນ, ລົງຈອດເດີ່ນສະໜາມ

ອັດໄວ.

ໆລໆ

ຄຳກອນແຕ່ພວກທີ່ມີແຕ່ ໗ ຄຳຂຶ້ນໄປຈັດເປັນວັກນຶ່ງນັ້ນ ຕ້ອງຈັດເຂົ້າເປັນບົດ ຄື ໔ ວັກໃດຈັດເປັນບົດນຶ່ງ (ເວັ້ນແຕ່ຄຳກາບຕ້ອງແຕ່ງເປັນວັກຕິດຕໍ່ກັນໄປເລື້ອຍບໍ່ຈັດເປັນບົດ) ດັ່ງນັ້ນຄຳກອນບົດນຶ່ງຈຶ່ງມີ ໔ ວັກ ຖ້າແຕ່ງບໍ່ຄົບ ໔ ວັກ ຄຳກອນບົດນັ້ນກໍເຂີນບໍ່ມ່ອນຫຼືຂັດຈັງຫວະໃນເວລາຮ້ອງລຳແລະອ່ານ (ເວັ້ນແຕ່ບົດຂຶ້ນຕົ້ນ) ວັກທັງ ໔ ນັ້ນຮຽກຊື່ດັ່ງນີ້:

| | | | | |
|---|---|---|---|---|
| ວັກທີ່ | ໑ | ຮຽກວ່າ | ວັກສະດັບ | ໂຮມ ໔ ວັກນີ້ເປັນບົດ ໑ |
| ວັກທີ່ | ໒ | -"- | ວັກຮັບ | |
| ວັກທີ່ | ໓ | -"- | ວັກຮອງ | |
| ວັກທີ່ | ໔ | -"- | ວັກສົ່ງ | |

ຕົວຢ່າງ

ກ— <u>ກອນອ່ານ</u>

໑— ວັກສະດັບ — ສັບພະກອດກ້ຽວກອນເກົ່ານາຖແລງ

໒— ວັກຮັບ — ເທພາວະວາດພະນອມໄພກວ້າງ

໓— ວັກຮອງ — ບຸນຍອງຍັງ ເຊົາແຄນຄາວນຶ່ງ

໔— ວັກສົ່ງ — ສັ່ງລ່ອງຕ້າຍຕັ້ນບ້າກ່ອນບາ ໆ

ຂ— <u>ກອນລຳ</u>

໑— ວັກສະດັບ — ຄັນເຈົ້າເວົ້າຈັ່ງຊັ້ນກໍຮ້ອຍແມ່ນພັນດີ

໒— ວັກຮັບ — ຍາກຊິມີຄົນດີ ຕຸ້ຍິງຫຼາຍລົ້ນ

ບົດ ໑ { ໓- ວັກຮອງ - ມີແຕ່ຄົນບຸໝັ້ນ ອຸປະຊົນດົນປ່າ
໔- ວັກສົ່ງ - ທາເອົາດີຢ່າງເຈົ້າ ມີໜ້ອຍບໍ່ຫຼາຍ

໑- ວັກສະດັບ - ຊິເວົ້າສຳຂີ້ຮ້າຍ ຟັງກ່ອນກອນຖແລງ
ບົດ ໒ { ໒- ວັກຮັບ - ຍິງຈັ່ງນີ້ງບໍ່ຮູ້ຈັກແລງງາຍແຕ່ງບາຍອີ່ຫງັງຊ້ຳ
໓- ວັກຮອງ - ໃຫ້ພົວທຳປານແຫຼັງແລງງາຍບໍ່ຢາກແຕ່ງ
໔- ວັກສົ່ງ - ເພິ່ນສະແດງບອກໄວ້ວ່າຍິງນັ້ນຊື່ຊານ

<u>ໝາຍເຫດ</u> ເວລາແຕ່ງຂຶ້ນຕົ້ນເລື່ອງທຳອິດ ບົດຕົ້ນຈະໃຊ້ແຕ່ວັກຮອງ ກັບວັກສົ່ງ ຄືວັກຖ້ອນ ໓ ແລະ ຖ້ອນ ໔ ກໍໄດ້ ສ່ວນບົດຕໍ່ໆໄປ ຕ້ອງແຕ່ງໃຫ້ຄົບທັງ ໔ ວັກ ດັ່ງຢ່າງ:

ບົດຕົ້ນ { ໓- ວັກຮອງ - ມາເຫັນນ້ອງທອງເຕົາເບົ້າລ່ຽນ
໔- ວັກສົ່ງ - ພີ່ກໍອຽນຢາກເວົ້ານຳເຈົ້າຕັ້ງແຕ່ດົນ

໑- ວັກສະດັບ - ແຕ່ພີ່ຄຸບຄອ່າງຄົ້ນ ຜົ້ນເຫຼົ້າກໍເລົາ
ບົດຕໍ່ໄປ { ໒- ວັກຮັບ - ທ່ຽວທາງປອງເອົານາງໄດ້ສີ່ປີປາຍເຂົ້າ
໓- ວັກຮອງ - ຈຶ່ງໄດ້ມາເຫັນເຈົ້າແພກະເຈົາບົ່ງບ່ຽງ
໔- ວັກສົ່ງ - ມາເຫັນເນື້ອກ່ຳກັ່ງງ ຢາກຂໍເວົ້າບ່ອນຈິງ

## ໓ <u>ຄຳບຸພບົດແລະຄຳສ້ອຍ</u>

ຕາມທັມມະດາຄຳກອນລາວທັງຫຼາຍທີ່ໃຊ້ລຳແລະອ່ານ ແກ່ນຂອງຄຳກອນແທ້ໆນັ້ນ ວັກນຶ່ງໆ ມີແຕ່ ໗ ຄຳ ນອກນັ້ນເປັນບຸພບົດແລະຄຳສ້ອຍ:

ກ- <u>ຄຳບຸພບົດ</u> ແມ່ນຄຳສຳລັບຕື່ມເສີມທາງໜ້າຂອງຄຳກອນ ວັກໃດ ວັກ

ນຶ່ງ ເພື່ອໃຫ້ໄດ້ຄວາມຄັກແນ່ຂຶ້ນ ຄຳບຸພບົດນີ້ຢ່າງໜ້ອຍມີ ໒ ຄຳ ແລະ ຢ່າງຫຼາຍມີ ໔ ຄຳ ຕົວຢ່າງດັ່ງນີ້:

ເມື່ອນັ້ນ ສິນໄຊທ້າວ ທຽວທາງດັ້ນດົ່ງ <u>ນາກໍ</u> ຟັງພາກພຽງດູແມ້ງແມ່ນ ຄົນ <u>ເມື່ອນັ້ນນາກໍ</u> ຫອຍມືນ້າວ ກະດານໜາໜັກໜື່ນສອນສຽນຈົ້າ ກະແຈ ຟັ້ງຫຼຸດໄລ, ຄຳບຸພບົດນີ້ສ່ວນຫຼາຍແມ່ນຄຳຈຳພວກຕໍ່ໄປນີ້:

"ແຕ່ນັ້ນ, ເມື່ອນັ້ນ, ບັດນີ້, ທ້າວກໍ, ນາງກໍ, ຍາມນຶ່ງ, ປາງເມື່ອ, ຟັງຍິນ, ຟັງເນີ!" ເປັນຕົ້ນ.

ຂ– <u>ຄຳສ້ອຍ</u> ແມ່ນຄຳສຳລັບຕໍ່ທ້າຍ ຄຳກອນ ວັກໃດວັກນຶ່ງ ເພື່ອເນັ້ນ ຄວາມໃຫ້ຄັກ ຄຳສ້ອຍ ສ່ວນຫຼາຍແມ່ນຄຳເຫຼົ່ານີ້ "ແລເຍີ ນ້ອງເອີຍ, ແທ້ແຫຼ້ວ, ແລນາ, ພຸ້ນເຍີ" ເປັນຕົ້ນແລະ ຄຳສ້ອຍນີ້ ສ່ວນຫຼາຍຕື່ມໃສ່ວັກທີ່ ໑ ແລະວັກທີ່ ໔ ຕົວຢ່າງດັ່ງນີ້:

<u>ພີ່ກໍ</u> ເຫັນຮູບນ້ອງນັ້ນແຕ່ໃນມະໂນ <u>ແລເດ</u>

<u>ເໝືອນພ່ອນ</u> ແນມນຳຮັກຮູບຂວັນແຂວນໄວ້ ໂອຍ ໂອຍໂອ້ ຮູບແຮງ ຮ້ອນສວາດ

<u>ເທື່ອນີ້</u> ອ້າຍຈາກເຈົ້າ ເຈັຽຈະຮ້າງຮູບໄກ <u>ແລນາ</u>

<u>ຄິດເມື່ອ</u> ຮຽງຮູມນ້ອງໃນຣາຊພະສຸທາ <u>ທີ່ພຸ້ນ</u> ພັນພຍາຂາມຂາບມາ ຍຳຢ້ານ

<u>ເພິ່ງພີ່</u> ຍໍຍົກເຈົ້າຈອມປາງເປັນອາດ ແດນນາກນ້ອມເກັ້ງກັ້ງກິ່ງ ສະກຸນ <u>ພີ່ແລ້ວ</u>

## ໔. ຄຳປະຈຳບ່ອນ

ຄຳກອນບົດນຶ່ງ ມີ ໔ ວັກໆໃດກໍມີ ໗ ຄຳ (ບໍ່ນັບຄຳບຸພບົດແລະຄຳສ້ອຍເສົ້ານຳ) ໂຮມຄຳກອນບົດນຶ່ງມີ ໒໘ ຄຳ ໃນຈຳນວນຄຳທັງໝົດ ໒໘ຄຳນີ້ ຕ້ອງມີຄຳເອກ ໖ ຄຳ ແລະຄຳໂທ ໕ ຄຳ ຢູ່ປະຈຳບ່ອນຂອງມັນຈະຍ້າຍໄປບ່ອນອື່ນບໍ່ໄດ້ ຕົວຢ່າງດັ່ງນີ້:

ວັກທີ ໑ – ໐ ໐່ ໐້ ໐ ໐່ ໐ ໐

ວັກທີ ໒ – ໐ ໐ ໐ ໐່ ໐ ໐ ໐້

ວັກທີ ໓ – ໐ ໐ ໐້ ໐ ໐ ໐ ໐່

ວັກທີ ໔ – ໐ ໐່ ໐້ ໐ ໐້ ໐່ ໐

ວັກທີ ໑ – ສັບພະກອດ ກ້ຽວ ກອນ ເກົ່າ ມາ .ຖແລງ

ວັກທີ ໒ – ເຫ ພາ ອະ ວາດ ພນອມ ໃພ ກວ້າງ

ວັກທີ ໓ – ບຸນ ຍອງ ຍ້ງ ເຊົາ ແຄນ ຄາວ ບຶ່ງ

ວັກທີ ໔ – ສັງ ລ່ອງ ຝ້າຍ ຝັນ ບົ້ວ ກ່ອນ ບາ

໑ – ຫຼີງເຫັນ ໄມ້ ລ່າວ ລົ້ມ ລຽນ ຮ່ອມ ເຂົາ ຮອມ

໒ – ພູ ຫອນ ເລາະ ລຽບ ພະນອງ ນຳ ນ້ອງ

໓ – ເຕັນ ຍາ ກວ້າງ ເຂົາ ຄຳ ຄ້ອຍ ຄ່ຳ

໔ – ດອຍນັ້ນ ອີນ ແຕ່ງ ຕ້ງ ດູ ເອື້ອງ ຮຸ່ງ ເອືອງ

### ບົດທີ ໒

### ສັມຜັດ

ສັນພັດ ມາຈາກຄຳບາລີວ່າ "ສັນພັສສະ" ແປວ່າ ການຖືກຕ້ອງ ຫຼື ຊຸນຕຳ ໃນທີ່ນີ້ໝາຍເອົາຄຳຕ່າງໆ ໃນບົດກອນທີ່ຖືກຕ້ອງກ່ອງກັນ ຫຼື ເກາະກ່າຍກັນ ດັ່ງຕົວຢ່າງວ່າ:

ມາເຕັ້ນ<u>ບ້ອງ</u> ອີນ<u>ຕອງ</u> ແຕັ້ນ<u>ແຕ່ງ</u> ແຕພີ່ <u>ແຍງ</u>ຢາກເວົ້ານຳບ້ອງ ຕັ້ງແຕ່ດິນ ຄຳທີ່ມີຂີດຢູ່ກ້ອງນັ້ນ ແມ່ນຄຳທີ່ສັນພັດກັນຄື:

| | | |
|---|---|---|
| ບ້ອງ | ສັນພັດ | ຕອງ |
| ແຕ່ງ | -"- | ແຍງ |
| ເວົ້າ | -"- | ເຈົ້າ |

ລັກສນະຂອງສັນພັດນັ້ນ ມີ ໒ ຢ່າງ ຄື ສັນພັດນອກ ແລະ ສັນພັດໃນ.

## ກ. <u>ສັນພັດນອກ</u>

ສັນພັດນອກ ໝາຍເອົາຄຳໃນວັກທີ່ ໑ ໄປເກາະກ່າຍກັບຄຳໃນວັກ ທີ່ ໒ ໓-໔ ຕໍ່ໆໄປ ມີ ລັກສນະ ດັ່ງນີ້:

໑- <u>ລັກສນະກອນລຳ</u>: ຄຳສຸດທ້າຍຂອງວັກທີ່ ໑ ສັນພັດກັບວັກທີ່ ໑ ຫຼືທີ່ ໒ ຫຼືທີ່ ໓ ຂອງວັກຖ້ອນ ໒ ຄຳສຸດທ້າຍຂອງວັກຖ້ອນ ໒ ສັນພັດກັບຄຳທີ່ ໑-໒-໓ ຂອງວັກຖ້ອນ ໓: ຄຳສຸດທ້າຍຂອງວັກຖ້ອນ ໓ ສັນພັດກັບວັກທີ່ ໑-໒-໓ ຂອງວັກຖ້ອນ ໔ ຄຳສຸດທ້າຍຂອງວັກຖ້ອນ ໔ ສັນພັດກັບຄຳທີ່ ໑-໒-໓ ຂອງວັກທີ່ ໑ ຂອງບົດຕໍ່ໄປ ຕົວຢ່າງດັ່ງນີ້:

ແນວນ້ອງນີ້ ເກີດຢູ່ເຮືອນຜາ
ມານດາເອົາ ຟາກປູຕາງແປ້ນ [?]
ກິນແຕ່ ແລນເລັ້ນຈ້ອນ [?] ນອນເຝົ້າງຟາກໄມ້ໄຜ່ [?]

| | | |
|---|---|---|
| ຈຶ່ງບໍ່ | ໃສສ່ອງເຫຼື້ອມ | ທຽມອ້າຍຜ່າຍງາມ ໆ |
| | ນ້ຳບໍ່ລ້າງ | ເປັນກະດ່າງດຳຂາວ |
| ບໍ່ຄື | ສາວໃນວັງ | ນັ່ງນອນໝອນແກ້ວ |
| ນ້ອງນີ້ | ແນວນາມເຜັ້ນ | ເຜັ້ນຄາວຮອດກະດູກ |
| | ລູກຕູ້ໃດຢູ່ໃກ້ | ຢ້ານຄືເຜັ້ນກິ່ນເຜັ້ນ |

| | | | | | | | |
|---|---|---|---|---|---|---|---|
| ບົດຕົ້ນ | o | o່ | o້ | o | o່ | o | o̲ |
| | o̲ | o̲ | o̲ | o | o່ | o | o້ |
| | o̲ | o̲ | o້̲ | o | o | o | o່̲ |
| | o̲ | o່̲ | o້̲ | o | o້ | o່ | o̲ |
| ບົດ ໒– | o̲ | o່̲ | o້̲ | o | o່ | o | o̲ |
| | o̲ | o̲ | o̲ | o | o່ | o | o້̲ |
| | o̲ | o̲ | o້̲ | o | o | o | o່̲ |
| | o̲ | o່̲ | o້̲ | o | o້ | o່ | o |

໒– <u>ລັກສນະກອນອ່ານວິດຊຸມະລີ</u> ມີຫຼັກດັ່ງນີ້ –

ກ– ຄຳສຸດທ້າຍຂອງວັກທີ່ ໑ ສັມຜັດກັບຄຳທີ່ ໑–໒ ຫຼື ໔–໕ຂອງວັກທີ່ ໓.

ຂ– ຄຳສຸດທ້າຍຂອງວັກທີ່ ໒ ສັມຜັດກັບຄຳທີ່ ໑–໓ ຫຼືທີ່ ໕ ຂອງວັກທີ່ ໔.

ຄ– ຄຳສຸດທ້າຍຂອງວັກທີ່ ໓ ສັມຜັດກັບຄຳທີ່ ໒ ຫຼືທີ່ ໔ ທີ່ ໕ ຂອງວັກທີ່ ໑ ໃນບົດທີ່ ໒ (ບົດຕໍ່ໄປ)

ງ– ຄຳສຸດທ້າຍຂອງວັກທີ່ ໔ ສັມຜັດກັບຄຳທີ່ ໑–໒ ຫຼື ໔–໕ຂອງ

ວັກທີ່ ໒ ໃນບົດທີ່ ໒ (ບົດຕໍ່ໄປ)

## ຕົວຢ່າງ

ບົດທີ່ ໑ ວັກທີ່ ໑ – ເມື່ອນັ້ນ ພຸອະນາດຫ້າວຜູ້ຜ່ານ ຄອງສອັນ

–"– ໒ – ..... ປຸນຄໍາຄອນຄ່ອຍແໜ ສອງນ້ອງ

–"– ໓ – ເຮົາກໍ ນາງັນຕູ້ນລອງສາວ ສຸບ່າວ

–"– ໔ – ..... ຄ້າຍເພື່ອນພ້ອງພັນພ້ອມພ່ຳຫຼາຍ

ບົດທີ່ ໒ ວັກທີ່ ໑ – ຈັກກ່າວໃຫ້ຊອບຊື້ງ ແນບສນິ

–"– ໒ – ໝໍໂຫນຫວາຍບອກມາ ນອນພ້ອມ

–"– ໓ – ຮີມຮີມສ້ອຍສາວສີ ສຸມບ່າວ

–"– ໔ – ເຍົາວະຣາດຜູ້ຄີງຄ້ອນ ຄູ່ຂຽນ

| | | | | | | | |
|---|---|---|---|---|---|---|---|
| ບົດທີ່ ໑ ວັກທີ່ ໑ – | o | o່ | o້ | o | o່ | o | o̲ |
| –"– ໒ – | o | ọ | o | o່ | o | o | o້̲ |
| –"– ໓ – | o̲ | o̲ | o້ | o̲ | o̲ | o | o່̲ |
| –"– ໔ – | o̲ | o່ | o້̲ | o | o້̲ | o | o̲ |
| ບົດທີ່ ໒ ວັກທີ່ ໑ – | o | o່̲ | o້ | o̲ | o່̲ | o | o̲ |
| –"– ໒ – | o̲ | o̲ | o | o່̲ | o̲ | o | o້̲ |
| –"– ໓ – | o̲ | o̲ | o້ | o̲ | o̲ | o | o່ |
| –"– ໔ – | o̲ | o່ | o້̲ | o | o້̲ | o່̲ | o |

໓– ລັກສນະກອນ ສ (ໄທ) ໃຊ້ສັມຜັດນອກດັ່ງນີ້ –

ກ. ຄໍາສຸດທ້າຍຂອງວັກທີ່ ໑ ສັມຜັດກັບຄໍາທີ່ ໓ ຂອງວັກທີ່ ໒

ຂ. ຄຳສຸດທ້າຍຂອງວັກທີ່ ໒ ສັມພັດກັບຄຳສຸດທ້າຍຂອງວັກທີ່ ໓

ຄ. ຄຳສຸດທ້າຍຂອງວັກທີ່ ໓ ສັມພັດກັບຄຳທີ່ ໓ ຂອງວັກຖ້ອນ ໔

ງ. ຄຳສຸດທ້າຍຂອງວັກຖ້ອນ ໔ ສຳພັດກັບຄຳສຸດທ້າຍຂອງວັກຖ້ອນ ໒ ໃນບົດຕໍ່ໄປ.

ບົດທີ່ ໑ ວັກທີ່ ໑ – ຈະຮ່ຳປາງນາງສອັນ ສເວີຍສຸກ
– " – ໒ – ຢູ່ປາງມຸກພິມານ ສະໂມສອນ
– " – ໓ – ເພີຍພະແກແລດູ ແຜ່ນດິນດອນ
– " – ໔ – ເຫັນໄກສອນຄອດລູກ ໃນທີ່ມະຂາ
ບົດທີ່ ໒ ວັກທີ່ ໑ – ຜິນກັນນຳຈິດ ໃຫ້ພິສວາດ
– " – ໒ – ນຸຊບາດຢາກມີ ໂອຣະສາ
– " – ໓ – ເຫັນພຣະສຸຣິໂຍໄທ ເທີໃຊຊາ
– " – ໔ – ກັລຍາບຶກໄປ ດັ່ງໃຈປອງ.



## ຂ. <u>ສັມພັດໃນ</u>

ສັມພັດໃນ ໝາຍເອົາຄຳຢູ່ໃນວັກດຽວກັນ ເກາະກ່າຍກັນເອງ ຫຼືສັມພັດກັນເອງ ຈຳເພາະໃນວັກນັ້ນໆ ດັ່ງຕົວຢ່າງວ່າ –

ວັກທີ່ ໑ – ຫຼີງເຫັນໄມ້ລ່າວລົ້ມ ລຽນ<u>ຮ່ອນ</u> ເຂົາ<u>ຮອນ</u>

–"– ໒ – ພູຫອນ ເລາະ ລຽບ ພະ<u>ນອງ</u> ນຳ<u>ນ້ອງ</u>

–"– ໓ – ເຫັນຫາກອ້າງ ເຂົາ <u>ຄຳ</u> ຄ້ອຍ <u>ຄ່ຳ</u>

–"– ໔ – ດອຍນັ້ນ ອິນແຕ່ງຕັ້ງ ດູ<u>ເອື້ອງ</u> ຮຸ່ງ<u>ເອືອງ</u>

ສັມພັດໃນນີ້ ມີ ໒ ຢ່າງ ຄື ສັມພັດສຣະ ແລະສັມພັດພະຍັນຊນະດັ່ງຕໍ່ໄ
ປີ້ –

໑– <u>ສັມພັດສຣະ</u> ແມ່ນຄຳທີ່ເກາະກ່າຍກັນດ້ວຍສຽງສຣະດຽວກັນໃນວັກດຽວກັນມີ ໒ ຢ່າງ –

ກ– ສັມພັດທຽມຄູ່ ແມ່ນຄຳສຣະດຽວກັນຮຽງກັນຢູ່ ໒ ຄຳໂດຍບໍ່ມີຄຳອື່ນຂັ້ນ ຕົວຢ່າງ–

ຟັງ ເດີ ນ້ອງ<u>ທອງ</u> <u>ເຕົາເປົ້າ</u> ລ່ຽນ
ເອົາຈັກ ຂຽນຂີດ <u>ແຕ້ມແຕມ</u> <u>ທ້າຍກ່າຍ</u>ກອນ
ເອົ້າ ບ່ອນ<u>ບັ້ນຂັ້ນ</u> <u>ກ່ອນຕອນ</u> ຫຼັ້ງ
ປາງແຕ່ ວຽງຈັນຍັງ ຢູ່<u>ດີມີ</u> ເຈົ້າ
ອັນວ່າ ສາລີເຂົ້າ ໃນ<u>ນາຟ້າ</u> ທ່ອງ
ພວກລາວເອົາພີ່ນ້ອງ ສະບາຍ<u>ສ້າງ</u> <u>ຮ່າງ</u>ມີ

ຂ- ສັມຜັດທຽມແອກ ແມ່ນຄຳສຣະດຽວກັນ ສອງຄຳມີ ຄຳສຣະອື່ນຂັ້ນຢູ່ ເຄິ່ງຄຳນຶ່ງ ຕົວຢ່າງ-

ເອື້ອນຍາກທ້າວ ທັງ<u>ແຮ່ງ</u> ໂຮຍ<u>ແຮງ</u>

ເດີນດົງຫຼວງ ກວ່າ <u>ໄກ</u> ລື <u>ໄກ້</u>

ເລີຍຂຽວຂຶ້ນ ເຂົາ <u>ງອນ</u> ເມືອ <u>ງ່ອນ</u>

ພູອະນາດເຈົ້າ ໃຈ <u>ສລັ້ງ</u> ຮຸ່ງ <u>ຫຼັ້ງ</u>

ຯລຯ

໒. <u>ສັມຜັດພຍັນຊນະ</u> ແມ່ນຄຳທີ່ໃຊ້ພຍັນຊນະຕົວດຽວກັນ ຫຼື ມີສຽງຄ້າຍຄືກັນ ລຽນກັນຢູ່ໃນວັກດຽວກັນຕັ້ງແຕ່ ໒ ຂື້ນໄປ ຫຼື ຈະມີພຍັນຊນະອື່ນຂັ້ນຢູ່ຄຳນຶ່ງກໍໄດ້ ມີລັກສນະດັ່ງນີ້:

ກ. ສັມຜັດລຽນອັກສອນ ແມ່ນຄຳພຍັນຊນະຕົວດຽວລຽນກັນຢູ່ຕັ້ງແຕ່ ໒ ຄຳຂື້ນໄປໂດຍບໍ່ມີພຍັນຊນະອື່ນຂັ້ນດັ່ງນີ້:

ຟັງຍິນ ຟື້ງ <u>ສນັ່ນນ້າວ</u> <u>ເບີຍເບີກບົວ</u>ຣະພາ ຜຸ້ນເຢີ

ນັບແຕ່ ພູທອນຊຸນ ນະ<u>ຮາວເລົາລາ</u>ໄຫ້

ພຣະກີ ທອນພົນຕ້າຍ ເວ<u>ຫາຫຼາຍຫຼັ່ນ</u>

ມະ<u>ໂນນາດ</u> <u>ທ້າວທົງ</u> <u>ຜັ້ນຜ່າຍຫຼັ້ງ</u>

ຂ- ສັມຜັດຂັ້ນອັກສອນ ແມ່ນຄຳພຍັນຊນະດຽວກັນ ໃຊ້ສຣະ ຫຼື ຕົວສະກົດດຽວກັນ ລຽນກັນຢູ່ ໒ ຄຳ ແຕ່ມີພຍັນຊນະອື່ນ ຫຼື ສຣະອື່ນຂັ້ນຢູ່ຄຳນຶ່ງ ດັ່ງນີ້:

ເຫັນດອກໄມ້ <u>ກ້ານກ່າຍ</u>ນາງ<u>ກາຍ</u>

ກອງກັນສັບ ດອກຊ<u>ອນ</u>ແຊມຊ້<u>ອນ</u>

ຜູຫອມຫົວ — ເດີນດຽວດັ້ນດ່ຽວ

ຂ້າມຂອບຂັ້ນ — ເມືອຊັ້ນຊ່ອງຊັ້ນ

ຯລຯ

## ບ ໑ ທີ່ ມ

### ຄຳປະເພດຂອງຄຳກອນລາວ

ຄຳກອນໝາຍເອົາຄຳເວົ້າທີ່ແຕ່ງໃຫ້ມີສັມຜັດເກາະກ່າຍກັນເປັ ແຖວຖັນ ດັ່ງກອນເຮືອນ. ຄຳກອນລາວໝາຍເອົາຄຳປະພັນທີ່ເປັນກະວີນິພົນທຸກປະເພດໃນພາສາລາວ ດັ່ງນັ້ນຄຳວ່າ "ກອນ" ຈຶ່ງເປັນຊື່ໂຮມຂອງຄຳກະວີ ທີ່ມີຢູ່ໃນວັນນະຄະດີລາວທັງຫຼາຍດ້ວຍ ເຫດນີ້ ຈຶ່ງໄດ້ແບ່ງກອນລາວອອກເປັນຫຼາຍປະເພດ ຄື ກອນກາບ ກອນລຳ, ກອນອ່ານ, ກອນຮ່າຍ, ກອນຜຍາ, ກອນໂຄງ, ກອນສານ ກອນຂັບ, ກອນລ່ອງຂອງ ເປັນຕົ້ນ ຫຼັກເກນສ່ວນໃຫຍ່ຂອງກອນທັງຫຼາຍທີ່ກ່າວມານີ້ ມີລັກສນະຄືກັນດັ່ງກ່າວມາແລ້ວ ໃນບົດທີ່ ໑ ແລະທີ່ ໔ ໃນບົດທີ່ ມ ນີ້ ຈະກ່າວເຖິງລັກສນະທີ່ແຕກຕ່າງກັນອັນເປັນສ່ວນຍ່ອຍຂອງກອນຕ່າງໆທີ່ນັ້ນ—

### ໑ – ກອນກາບ

ຄຳວ່າ "ກາບ" ຕາມຄວາມໝາຍເດີມວ່າ ມາຈາກພາສາສັນສະກຣິດວ່າ ກາວຸຍ ແປງຕົວ ວ ເປັນ ພ ຈຶ່ງເປັນກາພຍ ແປຕາມໂຕວ່າ ຄຳເວົ້າຂອງກະວີ ຄືຄຳເວົ້າຂອງຜູ້ສລາດນັ້ນເອງ ຫຼື ຈະໝາຍວ່າ ຄຳເວົ້າທີ່ໄດ້ ຈັດແຈງໃຫ້ເປັນແຖວຖັນດີ ກໍໄດ້, ຖ້າໝາຍຕາມລັກສນະຂອງພາສາລາວ

"ຄຳກາບ" ກໍມີລັກສນະຄືສິ່ງເປັນກາບທັງຫຼາຍ ດັ່ງກາບກ້ວຍ ກາບອ້ອຍ ເປັນຕົ້ນ ເພາະມີລັກສນະຊ້ອນໂອບເຊິ່ງກັນແລະກັນ ຄຳກາບ ກໍເປັນຄຳທີ່ມີສັມພັດສັບຊ້ອນກັນ ດັ່ງສິ່ງເປັນກາບດັ່ງກ່າວແລ້ວ.

ຄຳວ່າ ກອນກາບ ກໍໝາຍເອົາຄຳກາບດັ່ງນັ້ນເອງ ມີກຳນົດຫຼັກເກນການແຕ່ງ ດັ່ງນີ້ະ

໑ – ກອນວັກ ໑ ໃຫ້ມີແຕ່ ໗ ຄຳ

໒ – ຄຳສຸດທ້າຍຂອງວັກທີ່ ໑ ຫຼືຄຳທີ່ ໗ ໃຫ້ສັມພັດກັບຄຳທີ່ ໑ ຫຼື ທີ່ ໒ ຫຼື ທີ່ ໓ ໃນວັກທີ່ ໒

໓ – ຄຳສຸດທ້າຍຂອງວັກທີ່ ໒ ໃຫ້ສັມພັດກັບຄຳທີ່ ໑ ຫຼືທີ່ ໒ ຫຼືທີ່ ໓ ໃນວັກຖ້ອນ ໒, ແລະໃນວັກຕໍ່ໆໄປກໍໃຫ້ໃຊ້ສັມພັດທຳນອງດຽວ–ກັນນີ້

ຕົວຢ່າງ–

| | |
|---|---|
| ສາທຸສາ | ຍໍມືໃສ່ເກົ້າ |
| ຂ້າພະເຈົ້າ | ຂໍກ່າວຕຳນານ |
| ເປັນນິທານ | ສືບມາແຕ່ກ່ອນ |
| ເວົ້າແຕ່ບ່ອນ | ປາງຂຸນບູຮົມ |
| ຄັ້ງປະຖົມ | ລົງເອົາກຳເນີດ |
| ລົງມາເກີດ | ໃນທີບຊຸມພູ |
| ຂຸນບູຮົມ | ກັບນາງເອກໃຄ້ |
| ໄດ້ເປັນໃຫຍ່ | ຂີງເຂດເມືອງລາວ |
| ຕັ້ງແຕ່ຄາວ | ຢູ່ເມືອງບູນານ |

ເປັນເຈົ້າຜ່ານ ປະເທດໜອງແສ
ເພິ່ນດູແລ ປົກຄອງໃພ່ຟ້າ
ໄດ້ລູກຫຼ້າ ບາມໝື່ນເຈັດຊາຍ
ເພິ່ນແຈກຢາຍ ໃຫ້ໄປເປັນເຈົ້າ
ຜູ້ກົກເຄົ້າ ຊື່ທ້າວຂຸນລໍ
ໄດ້ເປັນກໍ ລາວເອົາລ້ານຊ້າງ
ລົງມາສ້າງ ເມືອງໃຫຍ່ຊຽງທອງ
ຜູ້ຖ້ວນສອງ ຊື່ຍີ່ຜາລ້ານ
ໃຫ້ໄປບ້ານ ເມືອງໃຫຍ່ຫໍແຕ
ຟາກໜອງແສ ໄປທາງທິເບດ
ປົກຄອງເຂດ ເມືອງທ້ຫົວຂາວ ໆລໆ

## ໒. ກອນລຳ

ກອນລຳ ໝາຍເອົາຄຳທີ່ລຳໃສ່ກັບແຄນ, ຄວາມຈິງຄຳກອນລາວເກືອບທຸກປະເພດໃຊ້ລຳໃສ່ແຄນໄດ້ທັງມວນ ແຕ່ປະເພດທີ່ຮຽກວ່າ ນີ້ ມີພິເສດກວ່າ ເພາະໃຊ້ສຳລັບລຳໃສ່ແຄນໄດ້ດີກວ່າຄຳກອນປະເພດອື່ນໆ–ດັ່ງນີ້ ຈຶ່ງຮຽກວ່າ ກອນລຳ.

ລັກສນະຂອງກອນລຳນີ້ ມີ ໒ ຢ່າງ ຄື: ກອນຕັດ ແລະ ກອນເຍັ້ນ.

ກ. <u>ກອນຕັດ</u> ແມ່ນຄຳກອນປະເພດກອນກາບນັ້ນເອງ ແຕ່ຫາກໃຊ້ສັມຜັດໃນຕິດຕໍ່ໜໍ່ເນືອງກັນຫຼາຍ ແລະ ຕື່ມຄຳບຸພບົດເຂົ້າໄດ້ອີກຕາມໃຈຈິນ ເປັນອັກສະ ໗ ຄຳ ໙ ຄຳ ໑໑ ຄຳ ແລະ ໑໓ ຄຳ ກໍໄດ້ຕົວຢ່າງຕໍ່ໄປ

ນີ້,

ຟັງເດີເຈົ້າ ເບົ້າລ່ງນອີນຂງນ
ພື້ນາວງນ ຈີນທາງເປັນໂສກ
ຫງອຂ້ານໂຄກ ຈີນຫົວເຂົ່າຄອນ
ນັບແຕ່ ພື້ນາວອນ ນາບ້ອນນາໜ່ງອ
ນາງກໍ ເລີຍບໍ່ກ່ງອ ຄວາມພົ້ນສັນຍາ
ຫົວະໃຫ້ ເຄີກເວລາ ນາເສັ່ງດາຍດອກ
ຄັນບໍ່ມັກ ເປັນສັງນ້ອງບໍ່ບອກ ນາແຕ່ຫົວທີ
ອັນປີນາ ເອົາກັນນາຕັ້ງປີ ພິດຢາຕັ້ງພື້ນ
ຈີນວ່າຂັ້ນໄດພື້ນ ຫງອຂີ້ນຫງອລົງ
ເຊີນນ້ອງບອກກົງໆ ເອົາບໍ່ຫຼືບໍ່
ຄັນຊິເອົາວ່າບໍ່ ກໍໃຫ້ວ່ານາສາ
ຊິໄດ້ພິດສົງກາ ຄວາມຊາຍໝາຍນາດ
ເຊີນນ້ອງເອົາໃຫ້ຂາດ ຕັດທ່ອນຮອນສີນ ໆລໆ

ຂ. <u>ກອນເຍີນ</u> ກອນລຳແບບນີ້ມີລັກສນະຄືກັນກັບກອນອ່ານ ຄື ຕ້ອງແຕ່ງໃຫ້ຄົບທັງ ๔ ວັກເປັນບົດນຶ່ງ ເວັ້ນແຕ່ບົດຂື້ນຕົ້ນ ແລະ ຕ້ອງໃຊ້ຄຳເອກ ຄຳໂທ ປະຈຳບ່ອນໃຫ້ຖືກຕາມຫຼັກດັ່ງກ່າວແລ້ວ ໃນບົດທີ່ ๑ ຂໍ້ ແລະ ຂໍ້ ๔ ນອກຈາກນີ້ກໍໃຊ້ຄຳບຸພບົດຕື່ມເຂົ້າໄດ້ຫຼາຍຄຳທັງຕ້ອງໃຊ້ສັມຜັດນອກແລະໃນໃຫ້ຕິດຕໍ່ກັນໄປທຸກໆບົດ ດັ່ງຢ່າງດັ່ງນີ້ະ

ບົດຂື້ນຕົ້ນ ວັກ ນ ນາເຫັນໝ້າ ສາຍຕາຟ້າລ່ອງ
" ๔ ເຈົ້າຜູ້ຂາວຍອດດ້ວງ ຄົງສ້ອຍເກີ່ງສວຍ

ບົດ ໑ ວັກ ໑ ຫຼຽວເບິ່ງປີ້ວແລບສ້ວຍ ງາມສິ່ງທຽນສິງ
" ໒ ປີ້ລະບໍແນວຍິງ ໜໍ່ພຣະອິນອິງຍ້ອງ
" ໓ ຄໍກິນປ້ອງ ສອງຕາໃຫຼເລື່ອນ
" ໔ ພິປານຂຽນຂີດໄວ້ ໃນແປ້ນແຜ່ນທອງ ໆ

ບົດ ໒ " ໑ ສອງຝ່າຍແກ້ມ ອ່ອນຊ່ອນນອນຈັບ
" ໒ ອອກເປັນມັນຍິຍັບ ແຍກມາຫົວຍ້ານ
" ໓ ງາມເຫຼືອລົ້ນ ເກີນຄົນໂລກລຸ່ມ
" ໔ ຊຸມພວກເຮົາໝູ່ປີ້ ບໍ່ມີສັງອດ່ອງຂົນ

ບົດ ໓ " ໑ ຫຼຽວເບິ່ງກົ້ນ ວາດຢ່າງກາງແຂນ
" ໒ ປານມະຍຸຮາແພນ ແອ່ນທ່າງເພື່ອຟ້ອນ
" ໓ ບາດບາງຊອນຕາສິ້ງ ຫຼິງແລເຫຼືອດລ່ຳ
" ໔ ຕຳຖືກໃຜແມ່ນລົ້ນ ຫຼົງຫຼົ້ນຫຼົນນຳ ໆ

ບົດ ໔ " ໑ ຈັ່ງແມ່ນບໍ ຈັ່ງແມ່ນທັນນະຊາດເຊື້ອ ນ້ອຍໜໍ່ນາງນະ
" ໒ ບຸນໃຜມີ ຈັ່ງໄດ້ມາເປັນຜົວ ໜໍ່ນາງຄົນໂກ້
" ໓ ----ແນວພຣະໂພທິຍານຍ້ອງ ຍິ່ງງາມຕ້ອງສໂລຣ
" ໔ ---- ໂຊກໃຜມີຈັ່ງພີ້ ບຸນນ້ອຍແມ່ນບໍ່ເຕັນ

ໆລໆ

## ໓ ກອນອ່ານ

ກອນອ່ານໝາຍເອົາຄຳທີ່ເປັນເລື່ອງຍາວໆ ໃຊ້ສຳລັບອ່ານສູ່ກັນຟັງ ເພື່ອຮູ້ນິທານ ຫຼື ຄະຕິສັ່ງສອນ ສ່ວນຫຼາຍແມ່ນເລື່ອງຊາດົກ ໃນ ໕໐ ຊາດົກ ດັ່ງເລື່ອງການລະເກດ, ສິນໄຊ, ໄກ່ແກ້ວ ເປັນຕົ້ນ ຫຼັກເກນຂອງກອນອ່ານ

ນັ້ນ ຕ້ອງແຕ່ງໃຫ້ຖືກຕາມວັກ ແລະ ບົດຕລອດຈົນຄຳປະຈຳບ່ອນດັ່ງກ່າວ ແລ້ວ ຄື: ກອນອ່ານ ບົດ ໑ ໃຫ້ມີ ໔ ວັກ ແລະ ວັກໃດໃຫ້ມີ ໗ ຄຳ ເວັ້ນແຕ່ຄຳບຸພບົດແລະຄຳສ້ອຍ ນອກນັ້ນກໍໃຫ້ໃຊ້ຄຳເອກແລະຄຳໂທໃຫ້ ຖືກຕາມບ່ອນຢູ່ຂອງມັນ.

ລັກສນະຂອງກອນອ່ານມີ ໒ ຄື: ກອນອ່ານແບບທັມມະດາ ແລະ ກອນອ່ານແບບວິຊຸມາລີ (ສາຍຟ້າ ຫຼື ຫຼືບຟ້າ) ດັ່ງນີ້:

ກ. <u>ກອນອ່ານແບບທັມມະດາ</u> ກອນອ່ານແບບນີ້ ໃຊ້ແຕ່ສັມຜັດໃນແລະ ສັມຜັດອັກສອນບໍ່ໃຊ້ສັມຜັດນອກ ຕົວຢ່າງຂອງກອນແບບນີ້ແມ່ນກອນໜັງສື ຜູກທັງຫຼາຍນັ້ນເອງ ແຕ່ກ່ອນໃນໜັງສືຜູກສ່ວນຫຼາຍ ແຕ່ງບໍ່ສູ້ຈະຖືກຕາມ ລະບຽບ ມີຖືກຢູ່ແຕ່ເລື່ອງສິນຊັຍເລື່ອງດຽວ ດັ່ງນັ້ນຈິ່ງຂໍຍົກເອົາໜັງສືສິນ ຊັຍມາເປັນຕົວຢ່າງດັ່ງນີ້:

(<u>ພຣະຍາກຸສຣາດຄຶດຮອດນ້ອງສາວ</u>)

<u>ບົດນີ້ຈັກກ່າວ</u>

ວັກ ໑ – ພູໄຊຫົວ ກຸສຣາດພຍາເມືອງ ກ່ອນແລ້ວ
ບົດ ໑ ວັກ ໒ – ພຣະຄະນິງຕົນແດ ຄັ້ງທອງເຫມ້າງ
ວັກ ໓ – ໂສກີແຄ້ນເຄືອງພຣະໄທໝອງໝິ່ນ
ວັກ ໔ – ກໍບໍ່ມີເຕືອດແຕ້ງ ນ້ຳຕາຍ້ອຍຍ່າວໄຫຼ.

ວັກ ໑ – ພຣະບາດໄທ້ ຄະນິງຮອດກະນິດຖາ
ບົດ ໒ ວັກ ໒ – ວັນຄືນຄຶດ ຊູ່ຍາມບໍ່ມີມື້
ວັກ ໓ – ກໍບໍ່ ມີໃຜຊູ້ ເປັນຕາຍຕ້ານຂ່າວ
ວັກ ໔ – ເຈົ້າຢາດນ້ຳ ບຸນຍູ້ຮອດພຣະອອນ.

ວັກ ໑ – ນັບແຕ່ ທຸກໂສກກັ້ນ ເກີນຍິ່ງສາມເດືອນ
ວັກ ໒ – ບໍ່ສເວີຍເຜົາພໍ ຄາບຄາຍຄາແຄັນ
ບົດ ໓
ວັກ ໓ – ອິງຜອມພຽງ ຕອງຕາຍເຫຼືອງຫຼ່າ
ວັກ ໔ – ເສເນດລ້ອມ ຫຼາຍຊັ້ນບໍ່ບານ.

ວັກ ໑ – ບໍ່ໃຄ່ ສຸກຢູ່ສ້າງ ສເວີຍຮາດເປັນພຍາໄດ້ແລ້ວ
ວັກ ໒ – ເພື່ອຄະນິງນິງສີ ຊູ່ວັນບໍ່ມີເອື້ອນ
ບົດ ໔
ວັກ ໓ – ກັນໃດໂອ້ ອະນຸຊາເຈົ້າພີ່ ແພງເອີຍ
ວັກ ໔ – ປານນີ້ ຍັກຊາເຈົ້າກິນແລ້ວຮູ້ວ່າຍັງ ພີ່ເດ.

ວັກ ໑ – ນັບແຕ່ ພີ່ຮ່ຳໄຫ້ ທຸກຄ່ຳວັນຄືນ
ວັກ ໒ – ຈັກວ່າ ເປັນຕາຍໃຜ ກໍບໍ່ມີນຳຮູ້
ບົດ ໕
ວັກ ໓ – ຄັນຈັກ ຕອມພົນຜ້າຍ ນຳຊູຊີງຍາດເອົານັ້ນ
ວັກ ໔ – ກໍບໍ່ ຮູ້ແຫ່ງແກ້ວ ພຣະກູຄ້າງທີ່ໃດ ໆ

ວັກ ໑ – ຜີຈັກ ໄປຈອບຈ້າງ ໝີ່ຮ່ຳຮຽນມົນ
ວັກ ໒ – ຫຳຕົນໂດຍ ດັ້ງທອນທະຍານຜ້າຍ
ບົດ ໖
ວັກ ໓ – ດັ່ງນັ້ນ ວິສັຍຊ້າ ຢຽວເກີດການຊື່ອ
ວັກ ໔ – ຜີດເຕົ່າເຊື້ອ ທອນເຕົ້າບໍ່ໃຄ່ຄອນ ໆ

ໆລໆ

ຂ. ກອນອ່ານແບບວິດຊຸມາລີ ກອນອ່ານແບບນີ້ກໍຄືກອນອ່ານແບບທັມມະດາ ດັ່ງກ່າວມາແລ້ວ ຕ່າງແຕ່ໃຊ້ສັມຜັດບອກໃຫ້ເກາະກ່າຍກັນໄປຕາມວັກແລະບົດ ຕລອດຈົນໃສ່ຄຳເອກຄຳໂທໃຫ້ຖືກຕ້ອງຕາມບ່ອນ(ເບິ່ງ ຊີ້) ລັກສນະກອນອ່ານແບບວິຊຸມາລີໜ້າ.......)

(ຕອນທ້າວຮຸ່ງຍົກທັບໄປຊ່ອຍລຸງທີ່ເມືອງເງິນຍາງ ແລ້ວຄິດຮອດຊູ້ພາຍ
ຫຼັງ)

ພໍດູຟ້າສວ່າງແຈ້ງເຮືອງຮຸ່ງ ປະກາຍກອງ ພຸ້ນເຢີ
ຮອງຮອງໃສ່ສ່ອງງາມ ເງົາຊ້າຍ
ຟັງຍິນຍູງທອງຮ້ອງເຮສຽງ ສູບເຖື່ອນ
ພູວະນາດໜ້ອມຍິນຮ້າຍ ຮຸ່ງນາງ ໆ

ຝູງເພື່ອນພ້ອມນອນເນົ້ງ ນິດທາ
ດີແກ່ເໝືອຍຮວາຍຮ່ວຍອດຊາງ ຍິນຍ້ອຍ
ລອນວ່າໄສຍາເຍື້ອນເທທວງ ທັງແປບ
ແມ້ງບື່ງ ເໝືອນພີ່ເຈົ້າຕື່ວສ້ອຍຊອນໃກ້ ກ່ອນອອນ ໆ

ຝັນວ່າຊະແລບເບື້ອເພິງພີ່ ປະຊິດຊິນ
ເໝືອນດັ່ງໂສມຄົງຄວນຮາບຮຽງ ອີມໜ້າ
ເທທວງເບື້ອງແຂນກົນ ເອື້ອນໄຫຼ່
ຝັນວ່າ ອຸ້ມກອດແກ້ວກ່ຳພ້າຈົງແຈ້ງ ດັ່ງເລີງ ໆ

ຂິຣະໃໝ່ເບື້ອສວ່າຍລູບ ເກສາ
ຮີນເພິງຊຸກຕື່ນຈອນ ໃຈລ້ອງ
ອີບ່ຍານຮ້ອນກ່ຳແດ ດານສວາດ
ເຍື້ອນຂ້ຳຊ່ອງຊິນເສື້ອ ສວ່າງກະສັນ ໆ

ດີແກ່ ດາວດາດຂ້ອນແຝງຝ່າຍ ທັກຂີນ
ອາໂຍຍັນເບີກບີນ ດາວຊ້າຍ

| | | | |
|---|---|---|---|
| | ສວາງໆກ້ອງ ໂກກີບ | ແກມໄກ່ | |
| | ພຣະບາດໜ້ອມຍິນຮ້າຍ | ຮຸ່ງຈອນ | ໆ |
| | ເຈົ້າຖ່າຍຕົວລູກອາບ | ສົງສີ | |
| | ຂຸນຄວາມຈັດຄາດປະໂຄນ | ຄຽນຊ້າງ | |
| | ຝູງຄົວຍ້າຍສາລີ | ລຽນແຈກ | |
| | ບໍ້ລູບປີ້ວມືລ້າງ | ລອດສເອີຍ | ໆ |
| | ອີລະແບກເປື້ອໃຫ້ຮຸ່ງ | ປະສົງບາງ | |
| ຈຽນແຕ່ | ມາຊົມສອງບໍ່ຫ່ອນເຄີຍ | ຄຳຮ້ອນ | |
| | ຫີບທອງກັ້ນກອຍວາງ | ໂອ້ຢ່າ | |
| | ເຮວເຮ່ງຄ້ອນຮັບຄ້ອງ | ປ່າວໄປ | ໆ |
| | ສວ່າງໆຍ້າຍແພນຫອກ | ຕາວແຂງ | ພຸ້ນເຢີ |
| ບາໄທ | ຜາຍພາບຄຳຄ່ອຍທົງ | ຄົງຄ້ອມ | |
| | ຫອຍແຄງຊູ້ເອົາສວານ | ຫຽມຫຸ່ນ | |
| | ຮັກຮູບງ້ອມຊົມເສື້ອ | ສວ່າງວອນ | ໆ |
| | ອີບາກໂອ້ໄກອຸ່ນ | ອີກກະສັນ | |
| | ຮອງໆຈັບຈອດບາງ | ໃບຫ້ອງ | |
| ເພື່ອປີ້ | ໄກກັບກີປີເດືອນ | ຮູ້ຂາວ | |
| ນີ່ຮາງ | ຄອນໂຄກໄອ້ດຽວນ້ອງ | ຫາກທົງ ຊ່ານລື | ໆ |
| ເມື່ອນັ້ນ | ຄ່າວໆແສັຊະຄ້ອນເລີຍລ່ອງ | ດົງງອນ | |
| | ແສນດອຍດົງລະດາດບັງ | ເຂົາຂັ້ນ | |

ຄຽງເທີ່ ມາໄກຮູ້ຮານຮຽນ ແຮນປ່າ
ເມີນຊ່ອງຊື້ນມົວໄມ້ ມືດເຕອນ ໆ

ບໍ່ເຫັນ ພະຫຼີງສ້ອຍຍອຍຍອດ ຍັງຕາ ພຸ້ນເຍີ
ອາໂຍລຽງດອກຮັ້ງ ໂຮຍເຮົ້າ
ຟັງຍິນ ຕາເວົາຮ້ອງເຮສຽງ ສູນຄູ່
ຄຶດພີ່ເຈົ້າສິນລ້ານ ລອດວອນ ໆ

ຖ້າບີ້ ບຸນບໍ່ພ້ອມເຄີຍຄູ່ ຮຽງສອງ ແລບໍ
ກອຍຄິ່ງນອນແຄ່ດົງ ດອມຂ້າ
ດີແກ່ ຫົມໆນ້ຳພານຕາ ລົມແກວ່ງ
ພອງເປົ່ງບ້າເພືອນພື້ງ ຟາດຕີນ ໆ

ແພ່ງໆເຫຼື້ອມສູນສ່ອງ ອູໄຫ
ຫຼີງເຫັນ ຕີນດອຍດົກດອກຈານ ຈູມແຈ້ງ
ຟັງຍິນ ຊະນີຮ້ອງແຄມດົງ ວ້ອນວ່ອນ
ເພືອນດັ່ງ ນ້ອງຈາກເຈົ້າຮຽມຮ້ອງ ຮຽກຂວັນ ໆ

ບໍ່ເຫັນ ຄ້າຍຍ່ອນໄມ້ເຂືອງເຂື່ອ ຮີມຕາ ພຸ້ນເຍີ
ມາລາລຽນແຄ່ກີ ແກມກ້ານ
ເລັ້ງດູ ມາລາພ້ອມສີມພະລີ ກົ້ວງ່າ
ຄຶດພີ່ຊູ້ນົງໜ້າ ໝ່ອງຫຼັງ

ຊະພາດພ້ອມທອງເທດ ຈວງຈານ
ຮັ້ງຮອນດົກດອກຫອມ ໂຮຍເຮົ້າ

ຄຶດເຖິງ  ສິຄານຄຸ້ມໃຈອອນ  ແອນມາກ
ນ້ອງໃຄ່ໄດ້ຊອນເກົ້າ  ພີ່ຕິນ  ໆ

ຄຽງດທີ່  ມາຈາກແກ້ວກູ່ຢູ່  ຊຽງເຄືອ  ກີ່ເດ
ຍິນກາງວັນຈິ່ມຈິງ  ປານບ້າ
ເມື່ອນັ້ນ  ແພນເຜືອເທົ້າພະລານໄພ  ພຽງຮາບ
ທ້າວກໍ  ແປປີ່ນໜ້າຫຼຽວຊູ້  ຊື່ວໄກ  ໆ

ຫູກຕາບຕ້ອຍຊ່ອງຊີ່  ຊົມບານ  ພູ້ນເຢີ
ຂີໄຮຈັບກິ່ງຮັງ  ເຮຮ້ອງ
ພູຫອນທ້າວດາວນກະຫາຍ  ທິວທອດ
ນະໂນຄຽດແຄ້ນທິນທ້ອງ  ປ່ຽວໃນ  ໆ
ລືຈັກ  ໄປຮອດເລົ້າລູງຊື່ມ  ຊົມພາຍໄດ້ເດ
ເພິງທີ່  ຄືນໄຊສາວສວ່າງກະສັນ  ເສັງໄຂ້
ເມື່ອນັ້ນ  ນາຍຄວານພ້ອມນາເຈືອງ  ຈອມຮາດ
ຈອນທີ່  ຂ້ານປ່າໄມ້ຢານແລ້ວ  ຈິ່ງຄືນ  ຊອບດາຍ  ໆ

້າວນັ້ນ  ແອບຖ່ອຍຮ້ອນຮັຕນາດ  ພູບານ
ັດປີ້  ຮິມອາລັຍຍ່ອມຍັງ  ຍິນຂ້ອງ
ະເມື່ອນັ້ນ  ເຮັງໂຍຍ້າຍພານຄຳ  ຄືນໃຍ່
ຝູງພວກພ້ອງເຊັງຊ້ອຍ  ຍີ່ເຍັງ  ໆ

ພວງໃສ່ຖ້ອຍເຍີ້ນອ່ອນ  ແອງຄອນ
ັດປີ້ເຈືອງກໍ  ອາງເຮົາເສັງພາກຄືນ  ໄຊຊູ້  ແລທ່ານ

| | | |
|---|---|---|
| ເຮົາຄ່ອຍ | ພາກັນຕັ້ນລວາພອນ | ເລີຍລ່ວງ ເຮວເຖິ້ນ |
| ເມື່ອນັ້ນ | ສອງຢູ່ຟູ້ຟັງຮ້າຍ | ອີບຄືນ ໆ |
| | ພື້ນຂ່ອງກວ້າງຫຼາຍທ່າ | ວັງທອງ |
| | ສະພື້ນແພນງ່າເງີຍ | ສຸມຕັ້ງ |
| | ສະບອງໜ້າບາເຈືອງ | ຄືດຄຽດ |
| | ເຈົ້າຍີ່ຍັ້ງເຊົາຊ້າງ | ຢູ່ຟັ້ງ ໆ |
| | ຄອນຜຽດຖ້ອຍແຂຊອບ | ຊັກຄະດີ |
| ພູທອນ | ຄືນເມືອງຫຼັ້ງສ່ອນໄທ | ທານຕ້ານ |
| ດູທີ່ | ບາສີຜູ້ຜິນຄອນ | ຄືດມາກ ເຮວເຖິ້ນ |
| ບໍ່ໃຄ່ | ຜ້າຍແຜ່ນລ້ານໄປໄດ້ | ເພື່ອນພິນ ຊ່ານລື ໆ |
| | ຕູສ່ຳຂ້າຜຸງຍາກ | ມີຄືນງ່າຍແລ້ວ |
| | ເປັນຄົນກົວກຽດອັນ | ອາຍໜ້າ |
| | ຄອນພືນຂໍ້ແຂແຂງ | ຕ້ານແກ່ |
| ເມື່ອນັ້ນ | ຂ້າທ່ານເຈົ້າທອງລ້ານ | ລວດດອນ ໆ |
| ຮູ້ວ່າ | ຮັກພີ່ຜູ້ນພັ້ນແດ່ | ໃຈຈິງ ຊອບດາຍ |
| ພູທອນ | ຄືນເມືອຫຼັ້ງສ່ອນວາຍ | ລຸງປ້າ |
| ອັນວ່າ | ປະສົງສີສ້ອຍໃສສັບ | ງ້ອມມ່ອນ ຄອນແລ້ວ |
| | ຄືດອອກພູ້ນພາຍໜ້າ | ຢ່າໄລ ຊອບເນີ ໆ |
| ດັ່ງນັ້ນ | ແກວປ່ອນຊ້າງຊີງເກີບ | ກອບບົວ ມາກແລ້ວ |
| ພໍທີ່ | ຮາວີໃສສິ່ງສາວ | ເປັນຂ້ອຍ |

ທີ່ ຈອມທົວຊູຜົລຄອນ ຄືດອອກ ເຮືອເຖີ້ນ
ານຈັກ ລຸລາບເກົ້າກີຮ້ອຍ ຊ່າງຫຼານ ໆ
ຜືອກໍ ຊົ້າກ່າວແຈ້ງບົນບອກ ເວນວາງ ດີດາຍ
ຮົາກໍ ກີທານມາໄປ່ທັນ ສາມມື້
ຈັກ ນອນພົນດັ້ນດົງຂວາງ ຕ້ານຖ່ອຍ ສັນນີ້
ຮ່າງວ່າ ກົວເພື່ອນພຸ້ນພົນຕີ້ ເລົ່າຄືນ ຊ່ານລື ໆ
ອິລະມ່ອຍໜ້າທັກວຮຸ່ງ ຄືດຄາມ
ຜືນໃຈເຖິງອອກເມືອງ ພົງເຊື້ອ
ແຕ່ ຮານຮຽນຮ້ອນຮົມເພິງ ພໍແພ່ງ ກີ່ດາຍ
ນບື່ງ ເປັນດັ່ງໄຂ້ໃນເບື້ອ ບໍ່ສ່ຳເບີຍ ໆ
ດຈັກ ຄືນແຕ່ງຕ້ອງທົນມື່ງ ມາດາ ທີ່ພຸ້ນ
ໃຕ້ ຕາຍບັນເທົາເລົ່າເລີຍ ໄປບ້ານ
ນື່ອນັ້ນ ນາຍພວງຮຸ້ຮົວຈນາ ນົບບາດ
ວທີ່ ພົນເພື່ອນຊັ້ນຊຽງລ້ານ ລ່ອງລຸງ ທ່ານພຸ້ນ ໆ
ອຍວ່າ ເສັ້ງພີ່ອື້ວໂສນສະອາດ ເມືອແມນ ແລຊ່ານ
ງນັ້ນ ລືຈັກຂຽວພູສູງປ່ອຍແຮງ ຮານງ້ອມ
ເວນຂາເຈົ້າຂານແຄນ ຖ້ອນຂນາດ
ຂຸເພື່ອນໝົ້ວຄືງຄ້ອມ ຄອບກັມ ໆ
ານວ່າ ສ້າງຍອດບ້ຳນົພຮາຊ ເຮືອນທົນ ທີ່ພຸ້ນ
ເງິນຄຳບັບອາເກີ ກອງລັ້ນ

ເຂົາກໍ ນອນສິນເຕົ້າເຖິງລຸງ ຕ້ານອ່ອນ ໂອນແລ້ວ
ຍັງທີ່ ຄຶດທ່ານພີ່ເປັນດັບ ບໍ່ວາງ ກີ່ດາຍ ໆ

ຍຽວວ່າ ເສັງທ່ອນທ້າວຫຼ້າງໃຫຍ່ ສິງຍີ ຄອບແລ້ວ
ເວນປາບັງບາບສນອງ ນຳສວ້າຍ
ເມື່ອນັ້ນ ບາສິຄ້ອຍຄຸງໃຈ ຈັກແຕກ
ພຣະບາດທ້າວຟັງຮ້າຍ ຮ່ຳຄານ ໆ

ອີຣະແມກປີ້ອຜັນດາບ ຮາງເຊັ້ງ
ຈາຣະຈາກອຍກ່າວຫານ ສຽງກ້າ
ອັນນຶ່ງ ກົວທີ່ຝູງໂພຍຕ້ອງເຕັ້ງເຂົາ ໄຂໂທດ
ບິນບອກຂ້າຄວາຍຊ້າງ ຊ່ອຍແຮງ ໆ

ພີ່ທີ່ ປິດໂທດແລ້ວຫຽນເລົ່າ ລືມຕີ
ເຕັ່ນວ່າ ປຸນແປງການໄກ່ຫຼຸ ໝາຍຖ້ອຍ
ໂດຍເດີນດ້ານປະຖົມມີ ທຸກທີ່ ເລີງແລ້ວ
ລຸງຊື່ນ ເຈົ້າຕື່ວສ້ອຍເຊີນໃຊ້ ເຕົ່າໄກ ໆ

ຍຽວວ່າ ຂາຍີ່ພູ້ນພ້ອມເພື່ອນ ພາຍແກວ ຮູ້ເດ
ພອຍວ່າ ກອຍໃຈໄປ່ປອຍອັນ ອາຍໜ້າ
ເມື່ອນັ້ນ ທະແມວປີ້ອອາວພອງ ວອນວ່າ
ລຸງທ່ານ ເຈົ້າລຸ່ມຟ້າໃຈແຈ້ງ ແກ່ນຈິງ ໆ
ພີ່ທີ່ ໄດ້ວ່າແລ້ວເລີຍຂອດ ສານຈຳ
ຫວັງຈັກ ພິງເທພາເພີ່ງສະຖຽນ ຄຸ່ນພັ້ນ

ແສງຍ້ອມ ປະສົງທຳແທ້ທຽມຕາມ ຄະດີໂລກ
ບໍ່ໂລບລັງວລອງຊັ້ນ ແງ່ງອນ ໆ

ໃຜໂສກໄຮ້ລຸງຊີບ ກຸນາ
ລອນຈັກ ພາງຫຼານແໜງສ່ອນອາຍ ເມືອງບ້ານ
ອັນວ່າ ໂສພາພົງງອິນຂຽນ ເຂັ້ນແຂ່ງ
ຄອນຄ່າລ້ານຄຳສ້ອຍ ໃຊ່ປະມານ ໆ

ໃຈບໍ່ ຄຶດແຕ່ງຫ້ອງຫັນເພື່ອນ ກອຍນິວ ນາກແລ້ວ
ອັນຈັກ ລອນລາພານຢ່າຖໃນ ຂາເຈົ້າ
ທີ່ວ່າ ຍັງກົວກົ້ພາຍເຮົາ ກອນກິ່ງ ດີດາຍ
ເມື່ອນັ້ນ ຜູ້ທີ່ຕາງ້ໍາຕາຍຊ້າງ ກ່ຽວເງີຍ ໆ

ອັນຈັກ ຫຽນແທບແທ້ສອງສິ່ງ ສເນຫາ ຍາກບໍ
ຜູ້ທອນ ເລີຍພານຄຳຕ່າວປຸນ ໄປໜ້າ
ຄັບຄາເທົ້າເຖິງເຫວ ຫ້ອຍຕາດ
ດີແກ່ ຂ້າຢູ່ດ້າວດອຍແຈ້ງ ຊີ່ດູ ໆ

ໆລໆ

## ໔ – ກອນຮ່າຍ

ກອນຮ່າຍ ແມ່ນຄຳກອນປະເພດນຶ່ງ ທີ່ນິຍົມຫຼາຍໃນໝູ່ປະຊາຊົນ ຄົນລາວ ບໍ່ຕໍ່າຕ້ອຍນ້ອຍໜ້າກວ່າຄຳກອນປະເພດອື່ນໆ ກອນຮ່າຍນີ້ສ່ວນຫຼາຍໃຊ້ສຳລັບສູດຂວັນຫຼືເທດ ເພື່ອຄວາມອອນຊອນຊື່ນມ່ວນອັນເຈືອປົນ

ໄປດ້ວຍຄຳສັ່ງສອນ ໃນຫຼັກສິນທັມແຫ່ງພຣະພຸທສາສນາ.

ຄຳວ່າ ຮ່າຍ ເຫັນຈະໄດ້ເຄົ້າມາຈາກຊະນີຮ້ອງ ແລະ ສຽງນົກເຄົ້າຮ້ອງດ້ວຍສຳນຽງ ອື່ອຍ ທີ່ເຮົາຮຽກວ່າ ຊະນີຮ່າຍໄມ້ ຫຼືນົກເຄົ້າຮ່າຍຄອຍ ດັ່ງຄຳກອນໃນເຣື່ອງທ້າວຮຸ່ງບົດນຶ່ງວ່າ –

ພໍເມື່ອວັນສອດໄມ້ລົງລຸ່ມ    ສຸບແສງ
ນາຍພິມມະບານໃສ່ໃຈ    ຈຳໄວ້
ດີແກ່ວັນແຊງຊ້າຍພືຣກສາ    ຖ້ອງເຖື່ອນ
ຊະນີຮ່າຍໄມ້ນອນຮ້ອງ    ຮ່ຳຄອຍ ໆ

ດັ່ງນີ້ ທຳນອງສູດຂວັນຫຼືທຳນອງເທດມະຫາຊາດ ຈຶ່ງຕ້ອງເຮັດສຽງໃຫ້ອື່ອອນດັ່ງຊະນີຮ່າຍໄມ້ແລະດ້ວຍເຫດນີ້ ຄຳກອນປຣະເພດນີ້ຈຶ່ງໄດ້ຮຽກວ່າກອນຮ່າຍ.

<u>ລັກສນະຂອງກອນຮ່າຍ</u>

ກອນຮ່າຍມີກຳນົດວັກ ໑ ຕັ້ງແຕ່ ໕ ຄຳຂຶ້ນໄປຈົນເຖິງ ໑໕ ຄຳການໃຊ້ສັມຜັດນັ້ນຄື ຄຳສຸດທ້າຍຂອງທຸກໆວັກ ໃຫ້ສັມຜັດກັບຄຳທີ່ ໑– ໔ ນ ຫຼື ໔ ໃນວັກຮອງຕໍ່ໆກັນໄປທຸກໆວັກ ສ່ວນຄຳເອກຄຳໂທບໍ່ຈຳກັດ ດືອຢ່າງດັ່ງຕໍ່ໄປນີ້:

<u>ກອນຮ່າຍສຳລັບສູດຂວັນ</u>

ສີສີ ສິດທິພຣະພອນ
ບໍວອນ ອະດີເອກ
ອະເນກກະເດຊາ
ໄຊຍະມັງຄະລາ

ມະຫາສີອີນັງຄະເລດ

ສາດຕະເພດພັນອາຄົມ

ຂຸນບູຮົມ ປຸນແຕ່ງແລ້ວ

ໃຫ້ລູກແກ້ວ ອອກກິນເມືອງ

ອິດທິເຮືອງທະອົງແທ່ນ

ມີປີແມ່ນມະຫາຄຸນ

ຂຸນແຖນດາແຕ່ງແລ້ວ

ໃຫ້ລູກແກ້ວ ກີ່ງລົງມາ

ເປັນອາຊາ ສືບສ້າງ

ເມືອງນີ່ງກວ້າງນາຄອງ

ຂຸນເຈືອງປອງເປັນໂຊກ

ໃຕ້ໂລກຍ່ອມ ລືຊາ

ທະອົງອານຸພາວາ ຍອດຍິ່ງ

ເປັນເຈົ້າຈອມນີ່ງ ເມືອງແມນ

ແສນເມືອງມາຊ່ອຍຄ້ຳ

ມີປີ ຊ້ຳຄູນຄົງ

ພຍາຈັກທະອົງທິສຮາດ

ພານມະນາດ ເລົ່າແຖມພອນ ໆລໆ

## ໒— ກອນຮ່າຍສຳລັບເທດ

ເຮື່ອງມະຫາຊາດບັ້ນກັນຫາ ຊາລີຮ່ຳໄຮ

ກຸມາຮາ ອັນວ່າ ເຈົ້າກຸມມານທັງສອງ

ປະນຸນຈິຕອາ ປ່ອຍຫຼຸດຊຸດອອກຈາກນິພານ ຂາບໍ່ຊ້າ ອ່າຍໜ້າຕໍ່ສາລາ ບ້ານິດກຍ້ອຍຍັ້ງ ໃຫຼຫຼັ້ງອອກຍິນນະນາ

ປັກການຸງ ເຂົ້າໄປສູ່ເວດສັນດີອໍຣະກະສັດ ອັສສັຕຖະປັຕຕັງ ນີດິນອັນສະ ບັ້ນສັ້ນສາຍໄປມາ ເໝືອນດັ່ງໄມ້ປ່າແປ້ງອັນຍັງອ່ອນປົ່ງຣະຮ່ອນໃບບາງເກີດ ອີນທາງພິລາດ ລົມລ່ອງຟາດສາຂາ ໃຫ້ຫວັ່ນໄຫວໄປມາ ໂອທັນຕາສຸ້ອງ ໃຫ້ ໄຫວ້ພີ່ແກ່ນໃຫ້ແຫ່ງດິນອ່າ

ຕາຕະ ຂ້າໄຫວ້ພີ່ເປັນເຈົ້າ

ສາອັນນາ ແມ່ນະທີເພືອຂ້າ

ແມ່ກໍພ້າຍັງທົວຣະຫງອ

ໃນໄພຂຽວປ່າໄມ້

ປະລຸກໄວ້ພາຍຫຼັງ

ສາຍັງ ແມ່ກໍຍັງຈັກມາໃນກາລະຍາມເຢັນ

ຂໍໃຫ້ ເພືອຂ້າໄດ້ເຫັນໜ້າ ແມ່ກໍພ້າກິນນິນ

ພໍໃຫ້ແມ່ໄດ້ຊົມ ສິງຈູບ

ພໍໃຫ້ແມ່ໄດ້ລູບໄລ້ອາບສົງສີ

ມີທັງສຸຣະພີພວງເພດ

ປະດັບເກດເກສາ

ກິນຜະລານຸນມາກ

ລູກໄມ້ຫຼາກອັນພາ

ສາອັນນາ ຂໍໃຫ້ເພືອຂ້າໄດ້ເຫັນໜ້າ ແມ່ກໍພ້າຍາມດຽວກ່ອນບໍ່ເປັນສັງ ອະຍັງ ພຣາມໂນ ອັນວ່າ ພຣາມຜູ້ນີ້

ວິກີເນຍ຺ອະວາ ແມ່ນວ່າມັນຈັກຂາຍກໍຈົ່ງໃຫ້ມັນຂາຍແລະເງິນຄຳ ແລະ

ຊ້າງມ້າ ຊ້າງມ້າ

ຫະເນຍ຺ຍະວາ ແມ່ນວ່າມັນຈັກຂ້າກໍໃຫ້ມັນຂ້າຕາມໃຈ ທຸກອັນໃດແອນຍິ່ງ

ອິດຊູ່ສິ່ງບໍ່ສົງກາ

ປັສສາມະ ຂໍໃຫ້ເຜືອຂ້າໄດ້ເຫັນໜ້າ ແມ່ກຳພ້າຍານດຽວກໍຂ້າເຖິງ

ຕາຕະ ຂ້າໄຫວ້ພໍ່ພຍາເປັນເຈົ້າ

ອະຍັງ ພຣາມໂນ ອັນວ່າ ພຣາມຜູ້ນີ້

ພະລັງກະປາໂທ ມີຝ່າຕີນອັນໃຫຍ່

ເລັບມັນໃຄ່ຫົ່ນໜອງ

ໜັງມັນພອງຍານຍ່ອນ

ພອງຊີ້ນກ້ອນ ຄືດົງ

ທີຄຸຕຕະຣຸຕໂຖ ມີຮີມສົບເບື້ອງເທິງຍາວຍື່ນ

ແຂ້ວພົ້ນລື່ນເປັນງາ

ເມື່ອມັນຈາອ້າປາກ

ນໍ້າລາຍຫາກໄຫຼຕົກ

ພັຄຄະນາສະໂກ ດັງຫັກທັງປູມໃຫຍ່

ທ້ອງມັນໃຄ່ທີ່ໄຫໄພ

ພັຄຄະປິຕຖີ ຫຼັງມັນຂດຄີໂກ່ມ

ແຂວຫັກໂງ່ມຄືຊີ

ວິສະມະຈັກຂຸໂກ ຕາບໍ່ດີນ້ອຍໃຫຍ່

ບໍ່ໃຊ່ດັ່ງຕາຄົນ ຄືຕາແມວໂພງສັກສາດ ທັນນະຊາດວ່າ

ແມ່ນຜີຍັກໜ້າໜຽວ ຫຽວໄປມາດູກລັ່ນ.

ໆ ລ ໆ

## ໕ – ກອນຜຍາ

ຄຳວ່າ "ຜຍາ" ມາຈາກຄຳບາລີວ່າ "ປັນຍາ" ແລະຄຳສັນສະກຣິດ "ປຣັຊຍາ" ນັ້ນເອງ ຄຳວ່າປັນຍາແລະປຣັຊຍາແປວ່າ ຄວາມຮູ້ແຈ້ງ, ຄວາມຮອບຮູ້, ຄວາມສລາດຫຼັກແຫຼມແຕ່ປັດຈຸບັນນີ້ ຄຳ ປຣັຊຍາ ໝາຍເອົາວິຊາທີ່ກ່າວດ້ວຍຫຼັກແຫ່ງຄວາມຮູ້ແລະຄວາມຈິງ.

ຄຳກອນຜຍາສ່ວນຫຼາຍແມ່ນຄຳກອນທີ່ພວກບ່າວສາວຄິດຜູກຂຶ້ນເວົ້າໃສ່ກັນໃນທັນທີທັນໃດແລະເປັນຄຳເວົ້າປຽບທຽບ ມີລ່ຽນມີຄົມອັນພາໃຫ້ເກີດຄວາມນຶກຄິດເຫຼືສລາດຫຼັກແຫຼມໃນການທີ່ຈະເວົ້າຕອບກັນ ດັ່ງນີ້ ຜຍາຈຶ່ງນັບວ່າເປັນບໍ່ເກີດແຫ່ງປະຕິພານ ຄື ພິບໄຫວແລະປັນຍາ.

ເນື່ອງຄຳກອນຜຍາ ເປັນຄຳທີ່ກ່າວຂຶ້ນທັນທີທັນໃດ ຕາມປັນຍາທີ່ຄິດໄດ້ໃນເວລານັ້ນ ດັ່ງນັ້ນ ຄຳກອນຜຍາ ຈຶ່ງບໍ່ມີລະບຽບແນ່ນອນ.

ສ່ວນຫຼາຍມັກເປັນກອນຜະສົມ ຄື ເອົາກາບແກ່ກອນແກ່ ຜະສົມກັນເຂົ້າໄປເປັນກອນຜຍາ ລາງເທື່ອກໍມີ ໒ ວັກ ໓ ວັກ ລາງເທື່ອກໍມີຄົບທັງ ໔ ວັກ ຄື ກອນອື່ນໆ ແຕ່ສ່ວນສຳຄັນແມ່ນສັມຜັດທີ່ນັ້ນ ຕົວຢ່າງດັ່ງຕໍ່ໄປນີ້:

– ທາງພີ່ສ້າງ ຂໍແປັນນ້ອງບໍ່ນຳ ສາບໍ!
ທາງພີ່ສ້າງ ຂໍຄຳ ນ້ອງບໍ່ໃຕ່

ບາດຜູ້ບ່າວໄຫໄກສ້າງ ແຕ່ຂີວໄມ້ອ້

ມີແຕ່ຕໍໄມ້ແຕ້ ເປັນສັງບຊິ່ຄອຍຄານ ຊັ້ນບໍ່!

– ເຈົ້າຜູ້ໝາກພີ່ພ່ອນ ມັນຫາກສຸກຝາກນາ

ເຈົ້າຜູ້ໝາກພີ່ລາ ມັນຫາກສຸກຝາກນ້ຳ ກ້ານກ່ອງສເນຫາ

ບາດອ່າກາກິນແລ້ວບິນໜີຮ້ອຍໝູ່

ເຈົ້າຫາກມີພື້ນຊູ້ ຕາຂ້ອຍບໍ່ເຫັນດອກນາ,

– ນ້ອງນີ້ ປອດລ້ອຍຊ້ອຍ ສເນີຮ້ອຍກາງກິ ກາບກິບໍ່ຕໍ່ ໜີ່ນ້ອຍ

ກິບໍ່ຊອນ ຊູ້ຊີຊ້ອນ ຜິວແອ້ມ ກິບໍ່ມີ

– ວ່າບໍ່ມີສອງຊ້ອນ ຂິນຄິ້ວນ້ອງເປັນສັງມາລາ ວ່າບໍ່ມີສອງ

ຊ້ອນ ຂິນຕາສັງມາຫງີ່ ຫຼື ນາງໄປຕໍ່ຊູ້ແຄມຮົ້ວປ່າໝາກເຍົາ

– ເຈົ້າຜູ້ພູເຫຼືອຄ້າງ ອິດບິປັນນ້ອງແດ່ ນ້ອງນີ້ ມີແຕ່ຄ້າງ

ເຄືອຊີກ້ຽວກິບໍ່ມີ.

– ວ່າບໍ່ມີເຄືອກ້ຽວ ສັງມາເປັນຍານຍ່າງ ວ່າໃຕ້ລ່າງເຈົ້າບໍ່

ກວ້າງ ສັງມາໄດ້ແຫຼ໊ງຄວາຍ.

– ນ້ອງນີ້ເປັນດັ່ງຈອກຢູ່ນ້ຳ ຮາກຢັ້ງບໍ່ເຖິງດິນ ໄຫຼເອີນໄປ

ເອີນມາ ໂລດບໍ່ມີເຟືອຍຄ້າງ ອ້າຍພີ່ອິດພໍຕາຍເປັນກິໄດ້ໄຫຼ

ມາໃຫ້ຄ້າງແດ່ ອັນນີ້ມີແຕ່ໄຫຼຢູ່ເລື້ອຍຊິໄປຄ້າງບ່ອນຈັ້ງໃດ.

ໆລໆ

ລັກສນະດັ່ງຕົວຢ່າງທີ່ກ່າວມານີ້ ຮຽກວ່າ ກອນພຍາ ກອນພຍາດັ່ງກ່າວນີ້ບໍ່ແມ່ນແຕ່ສຳລັບໃຊ້ເວົ້າກັນສຽດສີກັນໃນທາງບ່າວສາວເທົ່ານັ້ນ ໃຊ້ເປັນຄຳສຸພາສິດສັ່ງສອນ ແລະ ໃຫ້ນຶກຄິດໄປໃນທາງການບ້ານເມືອງ

ກໍໄດ້ ດັ່ງຕົວຢ່າງຕໍ່ໄປນີ້:

- ກວາງກິນໝາກຂາມປ້ອມ ໄປຄາກົ້ນຂີ້ມັ້ງ ຄັນວ່າມັ້ງບໍ່ຂີ້ສາມ ມື້ກະຕ່າຍຕາຍ.
- ເພິ່ນວ່າຫີນແຜ່ນລ້ານ ກ້ອນໃຫຍ່ຄືຊິຫັກແທ້ນໍ ບາດວ່າເອົາ ສະໂນຕິດຊັ່ງຊາສັງມາໄດ້ ຜີວ່າຕາມຕາຄື ຄືສະໂນຊິໜັກ ກວ່າ ຄັນແມ່ນຕາບໍ່ຄືວຊິເບົາເບື້ອງຝ່າຍສະໂນ.
- ເປັນຍິງຢ່າສູ່ຫາບນຽມບັ້ງແປນໂຕ່ກາຊິຕອດກິນແລ້ວ ເຮັດໃຫ້ ເປັນດັ່ງມ້ອນໃຍຕຸ້ມຕໍ່ໂຕໄວ້ເນີ.
- ອັນນຶ່ງໃຫ້ຄ່ອຍຫັນນຽມພຽງ ສັກກູນາບິກເຈົ້າ ຍາມເມື່ອບິນ ແອ່ວຜ້າຍຂາວແຈ້ງຈຶ່ງຄ່ອຍເຫັນ.

ໆລໆ

## ໗ - ກ ອ ນ ໂ ຄ ງ

ຄຳວ່າ ໂຄງ ເປັນພາສາລາວ ໝາຍເອົາ ຮ່າງ ຂອງສິ່ງຕ່າງໆ ແຕ່ຕາມທັມມະດາໝາຍເອົາຮ່າງກະດູກ ຮ່າງກະດູກມີກະດູກສັນຫຼັງເປັນ ແມ່ ແລ້ວມີກະດູກຂ້າງລຽນກັນອອກທັງສອງຂ້າງ ເປັນແຖວຖັນດັ່ງດຽວກັນ ກັບກອນເຮືອນອັນມີລັກສນະເປັນລະບຽບດີດັ່ງນີ້ ຄຳກອນປະເພດທີ່ແຕ່ງ ໃຫ້ມີລະບຽບເປັນແຖວຖັນດີດັ່ງໂຄງກະດູກຈຶ່ງຮຽກວ່າ ກອນໂຄງ ຫຼືໂຄງ ກອນ.

ກອນໂຄງຂອງລາວມີຫຼາຍຢ່າງ ຄື ມີໂຄງ ໒ ໂຄງ ໓ ໂຄງ ໔

ໂຄງ ໕ ໂຄງ ໙ ແລະໂຄງ ໗ ກອນໂຄງຕ່າງໆເຫຼົ່ານີ້ ແຕ່ບູຮານເພິ່ນນິຍົມໃຊ້ແຕ່ງໂສກຕ່າງໆ ດັ່ງໂສກຄ້ອງ ໂສກກອງ ໂສກປືນ ໂສກເຮືອເປັນຕົ້ນ ສ່ວນທີ່ແຕ່ງທາງການາອິນມີແຕ່ ໂຄງ ໕ ແລະໂຄງ ໗ ສະນັ້ນຈຶ່ງຈະກ່າວແຕ່ ໒ ໂຄງ ທີ່ນີ້ ຄື:

## ກ – ກອນໂຄງ ໕

ກອນໂຄງ ໕ ນີ້ໄດ້ຕົວຢ່າງມາຈາກກາບວິດຊຸມາລີ ໃນພາສາບາລີ ມີກຳໜົດ ວັກລະ ໕ ຄຳ ເປັນເກນ ໂຮມ ໔ ວັກເປັນບົດນຶ່ງ ແລະໂຄງແບບນີ້ລາວເອົາຮຽກວ່າ ໂຄງ ໕ ດັ້ນ ມີຫຼັກເກນດັ່ງນີ້ :

໑ – ໂຄງວັກ ໑ ມີ ໕ ຄຳ ໂຮມ ໔ ວັກເປັນບົດ ໑

໒ – ຄຳສຸດທ້າຍຂອງວັກທີ່ ໑ (ຄືຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງວັກທີ່ ໓.

໓ – ຄຳສຸດທ້າຍຂອງວັກທີ່ ໒ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງວັກທີ່ ໔.

໔ – ຄຳສຸດທ້າຍຂອງວັກທີ່ ໓ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑. ໒–ຫຼື ໓ ໃນວັກທີ່ ໑ ຂອງບົດທີ່ ໒ ຕໍ່ໄປ.

໕ – ຄຳສຸດທ້າຍຂອງວັກທີ່ ໔ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງບົດທີ່ ໒ (ຕໍ່ໄປ)

## ຕົວຢ່າງ

o o o o o

ບົດທີ່ ໑

໐ ໐ ໐ ໐ ໐
໐ ໐ ໐ ໐ ໐
໐ ໐ ໐ ໐ ໐
໐ ໐ ໐ ໐ ໐

ບົດທີ່ ໒

໐ ໐ ໐ ໐ ໐
໐ ໐ ໐ ໐ ໐
໐ ໐ ໐ ໐ ໐

ໄມ້ຄ່ອນເພື່ອ　　ລົມອອນ
ລົມອອນພັດ　　ກິ່ງສ້ອຍ
ຄອນຄອນໃຈ　　ຕ່ຳຄ້ອຍ
ຄຳນ້ອຍໃຜ　　ບໍ່ເຫັນ ໆ
ນ້ຳຍ້ອຍຢາດ　　ຕີນຜາ
ເຊັນເຊັນໄຫຼ　　ຜ່າໃຄ້
ກົບຂຽດອອງ　　ອຶ່ງຮ້ອງ
ທ່ານໄຫ້ຄອ່າ　　ຟັງສຽງ ໆ
ນ້ອງເມືອງລຸ່ມ　　ຮັກໃຍ
ສອງຊຽງຫາກ　　ເພິງຮູ້
ກົກໄກວໃບ　　ຊີ້ຄ້ອນ
ນ້ອງພ້ອມພີ່　　ອອນກະສັນ ໆລໆ

( ຈາກເຣື່ອງທ້າວຮຸ່ງ )

ໂຄງແບບນີ້ເມື່ອຖອດອອກຮຽງໃໝ່ ຄື ເອົາວັກທີ່ ໑ ຮຽງຕໍ່ວັກທີ່

ງ ແລະເອົາວັກທີ່ ໒ ຮຽງ ກັບວັກ ທີ່ ໔ ແລ້ວກໍເປັນໂຄງ ໕ ທັນນະ
ວາ ດັ່ງນີ້:

ກ– <u>ວັກ ໑ ກັບວັກ ໓</u>

| | |
|---|---|
| ໄມ້ຄ່ອນເພື່ອ | ລົມອອນ |
| ຄ່ອນຄອນໃຈ | ດີ່ຄ້ອຍ |
| ບົ້ວຍ້ອຍຢາດ | ຕີນຜາ |
| ກິບຂຽວດາ | ອື່ງຮ້ອງ |
| ນ້ອງເມືອງລຸ່ມ | ຮັກໃຍ |
| ກົກໄກວໃບ | ຊີ້ຄ້ອນ |

ຂ– <u>ວັກ ໒ ກັບວັກ ໔</u>

| | |
|---|---|
| ລົມອອນພັດ | ກິ່ງສ້ອຍ |
| ຄຳນ້ອຍໃຜ | ບໍ່ເຫັນ |
| ເຊັນເຊັນໄຫຼ | ຢ່າໄຄ້ |
| ທ່ານໄຫ້ຄ່ວາ | ຟັງສຽງ |
| ສອງຊຽງຫາກ | ເພິ່ງຮູ້ ໆ |

ຄ– <u>ກອນໂຄງ ກ ຫຼື ໂຄງມະຫາສິນທຸມາລີ</u>

ໂຄງ ກ ນີ້ເຫັນຈະໄດ້ແບບຢ່າງມາຈາກ ກາບມະຫາສິນທຸມາລີ ງນັ້ນຈຶ່ງຮຽກວ່າ ໂຄງມະຫາສິນທຸມາລີ ຫຼື ໂຄງ ໔ ສຸພາບ ກໍມີຫຼັກ ການແຕ່ງການແຕ່ງໂຄງແບບນີ້ມີດັ່ງນີ້:

໑– ໂຄງບົດນຶ່ງມີ ໔ ວັກ ໑–໒–໓ ມີວັກລະ ໗ ຄຳ ແຕ່ວັກທີ່ ໓ ຈະຕື່ມສ້ອຍທ້າຍອີກ ໒ ຄຳກໍໄດ້ ສ່ວນວັກທີ່ ໔ ມີ ໙ ຄຳ ໂຮມ ໔ ວັກ ມີ ໓໐ ຄຳ.

໒– ໃນຄຳໂຄງ ໓໐ ຄຳນີ້ມີຄຳປະຈຳບ່ອນຢູ່ ໑໐ ຄຳ ຄື ຄຳໂທ ໔ ແລະຄຳເອກ ໖ ດັ່ງແຜນຕໍ່ໄປນີ້:

໐ ໐ ໐ ໐່ ໐້ ໐ ໐
໐ ໐່ ໐ ໐ ໐ ໐່ ໐້
໐ ໐ ໐ ໐ ໐ ໐ ໐່
໐ ໐່ ໐ ໐ ໐້ ໐່ ໐້ ໐ ໐

<u>໓– ສັນຜັດ</u> ຄຳທີ່ ໒ ແລະວັກທີ່ ໓ ສັນຜັດກັບຄຳທີ່ ໗ ຂອງວັກທີ່ ໑;
ຄຳທີ່ ໕ ຂອງວັກທີ່ ໔ ສັນຜັດກັບຄຳທີ່ ໗ ຂອງວັກທີ່ ໒
ດັ່ງນີ້:



ດອກນຶ່ງ ເປັນສ່ຳດ້າວ ດາຣາ
ດອກບໍ່ເຫັນຫອມນາ ຮ່ອງ ເຮົ້າ
ດອກນຶ່ງ ເປັນຈອມຕາ ທັນງ່ອນ
ດອກສິ່ງໃດນັ້ນເຈົ້າ ຮ່ອນຕ້າຍ ເວຫາ

ດອກນຶ່ງຫອມອ່ອນພັງງ ໃນຫອງ

ແດເດືອດແດແດດວງ　　　　ເດື່ອດັ້ງ
ດອກບື່ງຍ່ອນເປັນກອງ　　　　ສະມາດ
ໄຄອາດລິງລອຍອັ້ງ　　　　ຈື່ງໄດ້　ເຊີຍຊົມ　ໆ

ດອກບື່ງເປັນຊາດເຊື້ອ　　　　ໃນໜອງ
ຫັດບໍ່ເປັນລອນກອງ　　　　ກ່ງວກ້ານ
ດອກບື່ງຄືອັນຫອງ　　　　ຫ້ງແຫ່ງ
ຫາດດວງມີໃນບ້ານ　　　　ສິ່ງນັ້ນ　ລືສາຍ　ໆ

( ຈາກໜັງສືເຈືອງ )

--== ຈົບ ==--